ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

24-30 ກັນຍາ 2024

ປີທີ 13

ສະບັບທີ 987

ລາຍສັປະດາ

## ມອບ-ຮັບເຄື່ອງ ແລະ ເງິນຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມ




(ສພຊ) - ຕອນສວາຍວັນທີ 13 ກັນຍາຜ່ານມາ ທີ່ສະພາແຫ່ງຊາດ (ສພຊ) ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຮັບເຄື່ອງຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມ ປະກອບມີ: ໝີ່ໄວໆ 80 ແກັດ, ເຂົ້າສານ 6 ເປົາ ແລະ ເງິນສົດຈຳນວນໜຶ່ງ ລວມມູນຄ່າ 19,560,000 ກີບ ຈາກພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ມອບໃຫ້ແກ່ສພຊເພື່ອນຳໄປປະກອບ

ອ່ານຕໍ່ໜ້າ 7

## ກອດກາເນື້ອໃນຮອບດ້ານຮ່າງກົດໝາຍ 2 ສະບັບ




(ສພຊ)-ວັນທີ 16-19 ກັນຍາ 2024 ທີ່ແຂວງວຽງຈັນ ໄດ້ມີກອງປະຊຸມກວດກາເນື້ອໃນຮອບດ້ານຮ່າງກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ (ສະບັບປັບປຸງ) ແລະ ຮ່າງກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປ ລາວ (ສະບັບປັບປຸງ) ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນໄຊຍະຈັກຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ນາງ ອາລີ ວົງໜໍ່ບຸນທຳ ປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ, ທ່ານ ນາງຂັນແກ້ວ ຫຼ້າມະນີເງົາຮອງຜູ້ວ່າການທະນາຄານ ແຫ່ງ ສປປ ລາວ, ບັນດາທ່ານປະທານກຳມາທິການ, ຮອງປະທານກຳມາທິການພາຍໃນສະພາແຫ່ງຊາດ, ຮອງລັດຖະມົນຕີ ແລະ ຮອງຫົວໜ້າອົງການທີ່ກ່ຽວຂ້ອງ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານປອ. ນາງສູນທອນ

ອ່ານຕໍ່ໜ້າ 6

## ສະຫຼຸບກາງສະໄໝ ການປະຕິບັດ ແຜນພັດທະນາຊີດຄວາມສາມາດ



(ສພຊ) - ວັນທີ 16 ກັນຍາຜ່ານມາ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມສະຫຼຸບກາງສະໄໝການຈັດຕັ້ງປະຕິບັດແຜນພັດທະນາການຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານທີ່ເປັນເສນາທິການ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານປອ. ອານຸພາບ ຕຸນາລົມ ປະ

ອ່ານຕໍ່ໜ້າ 6

## ຕິດຕາມກວດກາການໂຄສະນາ ແລະ ປະຕິບັດກົດໝາຍຢູ່ໄຊຍະບູລີ



ອ່ານຕໍ່ໜ້າ 8

## ທ່ານ ຄຳໃບ ດຳລັດ ເຄື່ອນໄຫວວຽກງານຢູ່ສະຫວັນນະເຂດ ແລະ ສາລະວັນ



ອ່ານຕໍ່ໜ້າ 6

## ຫຼາຍພາກສ່ວນມອບເຄື່ອງຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມ




(ສພຊ) - ວັນທີ 16 ກັນຍາ 2024 ທີ່ສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດຮ່ວມກັບຄະນະກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ ໄດ້ຈັດພິທີມອບ-ຮັບເຄື່ອງຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມ ຈາກຫຼາຍພາກ ສ່ວນ ທັງພາກລັດ, ເອກະຊົນ ແລະ ຄອບຄົວ ເຊິ່ງຕາງໜ້າຮັບໂດຍທ່ານ ນາງ ອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດ ແລະ ທ່ານ ນາງ ດຣ. ວິພາວັນ ພົມວິຫານປະທານກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ.

ບັນດາພາກສ່ວນທີ່ນຳເອົາວັດຖຸອຸປະກອນ, ປະເພດ

ອ່ານຕໍ່ໜ້າ 8

## ມອບເຄື່ອງຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມຢູ່ຫຼວງນ້ຳທາ



ອ່ານຕໍ່ໜ້າ 2



ທ້າວຄຳຄື?

(ໜ້າ 9)



ຈີນ ເພີ່ມອາຍຸ...

(ໜ້າ 11)

ເຫັນໄດ້ ໄດ້ຍິນ

ວິເສດ ສະແຫວງສຶກສາ

ເລື່ອງສາລະໜ້າຮູ້...

(ໜ້າ 12)

# LDB ມອບເງິນປະກອບສ່ວນສ້າງ ຫ້ອງມູນເຊື້ອ ແລະ ປະຫວັດສາດ




(ສພຊ) - ຕອນບ່າຍວັນທີ 16 ກັນຍານີ້ ທີ່ສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບເງິນຈຳນວນ 300 ລ້ານກີບ ຈາກທະນາຄານພັດທະນາລາວ (LDB) ເພື່ອປະກອບສ່ວນໃນການສ້າງຫ້ອງມູນເຊື້ອແລະປະຫວັດສາດຂອງສະພາແຫ່ງຊາດ ໂດຍການກ່າວມອບຂອງທ່ານວຽງຄໍາວັນ ສີລາລົມ ຜູ້ອໍານວຍການທະນາຄານພັດທະນາລາວ ແລະ ກ່າວຮັບໂດຍທ່ານ ນາງ ອໍາໄພວອນ ລ້ອມບຸນແພງ ກໍາມະການສໍາຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ ເຊິ່ງມີພາກສ່ວນກ່ຽວຂ້ອງຂອງທັງສອງຝ່າຍເຂົ້າຮ່ວມເປັນສັກຂີພະຍານ; ໂອກາດດັ່ງກ່າວ, ທ່ານ ນາງ ອໍາ ໄພວອນ ລ້ອມບຸນແພງ ໄດ້ກ່າວສະແດງຄວາມຂອບໃຈທະນາຄານພັດທະນາລາວ ທີ່ໄດ້ປະກອບສ່ວນ ແລະ ສະໜັບສະໜູນການສ້າງຫ້ອງມູນເຊື້ອ ແລະ ປະຫວັດສາດ, ພ້ອມກັນນັ້ນ ກໍໄດ້ມອບໃບຍ້ອງຍໍຂອງຄະນະປະຈໍາສະພາແຫ່ງຊາດ ໃຫ້ທະນາຄານພັດທະນາລາວ ເພື່ອສັນລະເສີນຜົນງານ ແລະ ຄຸນງາມຄວາມດີໃນການປະກອບສ່ວນ ຄັ້ງນີ້.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

# ຕິດຕາມກວດກາການປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດ



(ສພຂ) - ວັນທີ 9 ກັນຍາຜ່ານມາ, ທ່ານ ບຸນຕາ ເທບພະວົງ ກໍາມະການສໍາຮອງສູນກາງພັກ, ຄະນະປະຈໍາສະພາແຫ່ງຊາດ, ປະທານກໍາມາທິການວັດທະນະທໍາ-ສັງຄົມ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດແຫ່ງຊາດໃນໄລຍະຜ່ານມາ ຢູ່ແຂວງຄໍາມ່ວນ ເຊິ່ງໄດ້ພົບປະທ່ານຮອງເຈົ້າແຂວງ, ຜູ້ຊີ້ນໍາວຽກງານຂົງເຂດວັດທະນະທໍາ-ສັງຄົມ ເພື່ອແຈ້ງຈຸດປະສົງໃນການເຄື່ອນໄຫວວຽກງານ ແລະ ໄປຢ້ຽມຢາມ ແລະ ເຮັດວຽກຢູ່ວິທະຍາໄລເຕັກນິກ-ວິຊາຊີບແຂວງຄໍາມ່ວນ.

ຈຸດປະສົງໃນການເຄື່ອນໄຫວວຽກງານຄັ້ງນີ້ເພື່ອຜັນຂະຫຍາຍ ແລະ ຊຸກຍູ້, ຕິດຕາມກວດກາມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 117/ສພຊ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝ 5 ປີ 2021-2025 ແລະ ທິດທາງແຜນການທ້າຍສະໄໝຮອດປີ 2025, ທິດທາງແຜນການປະຈໍາປີ 2024 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ເປັນແຜນການຈັດຕັ້ງປະຕິບັດໃຫ້ມີຈຸດສຸມ, ມີປະສິດທິພາບແລະປະສິດທິຜົນ; ເພື່ອຕິດຕາມ, ກວດກາ ແລະ ຊຸກຍູ້ປຸກລະດົມໃຫ້ຂະແໜງການຢູ່ທ້ອງຖິ່ນ ຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດແຫ່ງຊາດໃນໄລຍະຜ່ານມາ ທັງເປັນການເກັບກໍາຂໍ້ມູນມາວິເຄາະ, ວິໄຈ ໃຫ້ເຫັນດ້ານດີ ແລະ ຂໍ້ຄົງຄ້າງ, ໃຫ້ຮູ້ສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງເພື່ອນໍາມາປັບປຸງແກ້ໄຂກ່ຽວກັບຄຸນນະພາບການສຶກສາໃນໄລຍະໃໝ່ ແລະ ເສີມສ້າງຊັບພະຍາກອນມະນຸດ ນໍາໄປສູ່ການພັດທະນາປະເທດທາງດ້ານເສດຖະກິດ-ສັງຄົມ, ການເມືອງ ແລະ ວັດທະນະທໍາ. ພ້ອມນັ້ນ, ກໍເພື່ອລາຍງານຜົນການຕິດຕາມກວດກາຕໍ່ກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ແລະ ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX.

ຕອນບ່າຍຂອງວັນດຽວກັນ ທີ່ສະພາປະຊາຊົນແຂວງ (ສພຂ) ໄດ້ຈັດກອງປະຊຸມຕິດຕາມ, ກວດກາການຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດແຫ່ງຊາດໄລຍະຜ່ານມາ ໂດຍການເປັນປະທານຂອງທ່ານ ບຸນຕາ ເທບພະວົງ ເຊິ່ງມີທ່ານ ບຸນມີ ພົມມະສອນຮອງເລຂາພັກແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈໍາເຂດເລືອກຕັ້ງທີ 12 ທັງເປັນປະທານ ສພຂ ພ້ອມດ້ວຍບັນດາທ່ານຮອງປະທານສະພາປະຊາຊົນແຂວງ, ຮອງເຈົ້າແຂວງ, ຄະນະປະຈໍາ ສພຂ, ສສຊ ປະຈໍາເຂດເລືອກຕັ້ງທີ 12, ສະມາຊິກສະພາປະຊາຊົນແຂວງ, ພະແນກການ-ອົງການທີ່ກ່ຽວຂ້ອງຂອງແຂວງ ແລະ ແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ. ກອງປະຊຸມໄດ້ຮັບຟັງການລາຍງານຂອງບັນດາພະແນກການທີ່ກ່ຽວຂ້ອງຄື: ສຶກສາທິການແລະກິລາ, ສາທາລະນະສຸກ, ແຮງງານ ແລະ ສະຫວັດດີການສັງຄົມ, ແຜນການ ແລະ ການລົງທຶນ, ການເງິນ, ພາຍໃນ; ຈາກນັ້ນ, ທ່ານປະທານກອງປະຊຸມ ພ້ອມດ້ວຍຜູ້ເຂົ້າຮ່ວມ ໄດ້ແລກປ່ຽນຄໍາຄິດ-ຄໍາເຫັນ ແລະ ມີບາງຄໍາຖາມເຈາະຈີ້ມຕໍ່ບັນດາພະແນກການ ຢ່າງກົງໄປ-ກົງມາ ເພື່ອເປັນຂໍ້ມູນອັນຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ.

**(ເອື້ອ ມະໂນສິງ)**

# ເຜີຍແຜ່ຜົນສໍາເລັດກອງປະຊຸມສະໄໝສາມັນ ເທື່ອທີ 7 ຢູ່ກອງບັນຊາການທະຫານນະຄອນຫຼວງ



(ສພຊ) - ຕອນເຊົ້າວັນທີ 10 ກັນຍາຜ່ານມາ, ສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ລົງພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ຊຸດທີ II ຢູ່ກອງບັນຊາການທະຫານນະຄອນຫຼວງວຽງຈັນ ເຊິ່ງມີທ່ານ ພົຈວ. ໂສພາວັນ ທໍາມະເທວາ ຫົວໜ້າການເມືອງກອງບັນຊາການທະຫານນະຄອນຫຼວງວຽງຈັນ ພ້ອມດ້ວຍຄະນະພັກ-ຄະນະບັນຊາ ອົງການ 5 ຫ້ອງ, ພະແນກການ ແລະ ພະນັກງານຫຼັກແຫຼ່ງ ໃຫ້ການຕ້ອນຮັບ ແລະ ເຂົ້າຮ່ວມຮັບຟັງ.

ທ່ານ ຄໍາຜອງ ແສງສະຫວ່າງ ສສຊ, ຮອງປະທານຄະນະກໍາມະການຍຸຕິທໍາແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄດ້ເຜີຍແຜ່ຜົນສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສປນວ ຊຸດທີ II ໂດຍຍົກໃຫ້ເຫັນກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສໍາຄັນຕ່າງໆຂອງນະຄອນຫຼວງເພື່ອປັບປຸງແກ້ໄຂ, ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບໝາກຜົນສູງ; ຈາກນັ້ນ, ທ່ານ ພົຕ. ປອ. ວົງສັກ ພັນທະວົງ ຄະນະປະຈໍາສະພາແຫ່ງຊາດ, ປະທານກໍາມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ກໍໄດ້ເຜີຍແຜ່ຜົນສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX ເຊິ່ງກອງປະຊຸມໄດ້ຄົ້ນຄວ້າພິຈາລະນາວຽກງານສໍາຄັນຕ່າງໆຂອງຊາດ ເປັນຕົ້ນບົດລາຍງານໂດຍສັງເຂບຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໄລຍະ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2024. ໂອກາດດັ່ງກ່າວ ຍັງໄດ້ໂອ້ລົມແລະເນັ້ນໜັກໃຫ້ຄະນະພັກ-ຄະນະບັນຊາ ແລະ ພະນັກງານຫຼັກແຫຼ່ງ ສ້າງຄວາມເຂົ້າໃຈເປັນເອກະພາບ ແລະ ເລິກເຊິ່ງຕໍ່ບັນດາເນື້ອໃນຈິດໃຈທີ່ໄດ້ກໍານົດໄວ້ໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສພຊແລະສປນວ ເພື່ອເຮັດໃຫ້ກອງບັນຊາການທະຫານນະຄອນຫຼວງວຽງຈັນ ມີຄວາມເຂັ້ມແຂງກ້າວຂຶ້ນຢ່າງບໍ່ຢຸດຢັ້ງ.

**(ຮທ. ໄຊພອນ ຄໍາຜົງໄຊ)**



## ມອບເຄື່ອງ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 18 ກັນຍາ 2024 ທ່ານ ພົຕ. ປອ. ວົງສັກ ພັນທະວົງ ປະທານກໍາມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທັງເປັນສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ 3 ພ້ອມດ້ວຍຄະນະກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ ໄດ້ນໍາເຄື່ອງຊ່ວຍເຫຼືອໄປມອບໃຫ້ແກ່ຜູ້ປະສົບໄພນໍ້າຖ້ວມຢູ່ແຂວງຫຼວງນໍ້າທາ ເຊິ່ງປະກອບມີເຄື່ອງນຸ່ງຫົ່ມ, ເຂົ້າສານ, ອາຫານແຫ້ງ, ນໍ້າດື່ມ ແລະ ເຄື່ອງໃຊ້ສອຍຕ່າງໆທີ່ຈໍາເປັນ ລວມມູນຄ່າ 1,751,500,000 ກີບ ຕາງໜ້າຮັບໂດຍທ່ານ ຄໍາຟອງ ອິນມານີປະທານສະພາປະຊາຊົນແຂວງ, ມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

ວັນດຽວກັນ, ທ່ານພົຕ. ປອ. ວົງສັກ ພັນທະວົງ ແລະ ທ່ານ ຄໍາຟອງ ອິນມານີ ພ້ອມດ້ວຍຄະນະກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດແລະ ສະມາຊິກສະພາປະຊາຊົນແຂວງ ຍັງໄດ້ໄປຢ້ຽມຢາມ ແລະ ມອບເຄື່ອງຊ່ວຍເຫຼືອໃຫ້ແກ່ປະຊາຊົນຜູ້ທີ່ຖືກຜົນກະທົບຈາກອຸທົກກະໄພຢູ່ 4 ບ້ານຂອງເມືອງຫຼວງນໍ້າທາຄື: ວຽງໃຕ້ ມີປະຊາຊົນແລະຄອບຄົວທີ່ໄດ້ຮັບຜົນກະທົບ 149 ຫຼັງຄາເຮືອນ, ວຽງເໜືອ 291 ຫຼັງຄາເຮືອນ, ດອນສໍາພັນ 206 ຫຼັງຄາເຮືອນແລະ ໂພນໄຊ 50 ຫຼັງຄາເຮືອນ; ທັງນີ້, ກໍເພື່ອເປັນຂວັນ ແລະ ກໍາລັງໃຈ ພ້ອມທັງບັນເທົາທຸກເບື້ອງຕົ້ນໃຫ້ແກ່ປະຊາຊົນຜູ້ທີ່ຖືກຜົນກະທົບ ແລະ ຍັງຈະໄດ້ສືບຕໍ່ໃຫ້ການຊ່ວຍເຫຼືອຕື່ມອີກໃນຫຼາຍບ້ານທີ່ປະສົບໄພໄດ້ຮັບຜົນເສຍຫາຍໃນຄັ້ງນີ້ໃຫ້ທົ່ວເຖິງ.

**(ນາງ ກຸກກິກ ບຸດດາໄຊ)**

# ຕິດຕາມກວດກາວຽກງານຍຸຕິທຳ ຢູ່ 2 ແຂວງ



(ສພຂ)-ວັນທີ 10-12 ກັນຍາຜ່ານມາ, ທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການຍຸຕິທຳພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຊຸກຍູ້, ຕິດຕາມກວດກາວຽກງານຍຸຕິທຳປະຈຳປີ 2024 ຢູ່ແຂວງຫົວພັນ ແລະ ຊຽງຂວາງ ເຊິ່ງໄດ້ປະຊຸມຮ່ວມກັບສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ແລະ ເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ ພ້ອມດ້ວຍຄະນະປະຈຳສະພາປະຊາຊົນແຂວງ (ຄປຈສພຂ), ຫ້ອງວ່າການແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ພະແນກຍຸຕິທຳແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໂດຍມີຈຸດປະສົງເພື່ອຕິດຕາມກວດກາການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ການຜັນເປັນນິຕິກຳໃຕ້ກົດໝາຍ, ຄົ້ນຄວ້າຕອບສະໜອງຂໍ້ມູນໃຫ້ຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ມີຄຳເຫັນໃນກອງປະຊຸມສະໄໝສາມັນເທື່ອທີ 8.

ກອງປະຊຸມໄດ້ຮັບຟັງການລາຍງານການຕິດຕາມກວດກາວຽກງານຍຸຕິທຳໂດຍຫຍໍ້ຈາກ ຄປຈສພຂ, ສສຊ ປະຈຳເຂດເລືອກຕັ້ງທີ 8 ແລະ 9, ຕາງໜ້າພາກສ່ວນກ່ຽວຂ້ອງຂອງແຂວງ: ອົງການໄອຍະການປະຊາຊົນ, ສານປະຊາຊົນ, ພະແນກຍຸຕິທຳ ແລະ ກອງບັນຊາການປ້ອງກັນຄວາມສະຫງົບໃນການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດໃນຂົງເຂດຍຸຕິທຳ ກໍຄືການຕິດຕາມກວດກາການຜັນຂະຫຍາຍບາງມາດຕາຂອງກົດໝາຍໃນຂົງເຂດຍຸຕິທຳເພື່ອເປັນບ່ອນອີງໃນການຄົ້ນຄວ້າ, ສະໜອງຂໍ້ມູນໃຫ້ແກ່ຄປຈສພຊ ມີຄຳເຫັນໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ພ້ອມທັງເປັນບ່ອນອີງໃນການປຶກສາຫາລືແລະ ສະເໜີພາກສ່ວນກ່ຽວຂ້ອງຄົ້ນຄວ້າ ແລະ ມີມາດຕະການແກ້ໄຂຢ່າງເຂັ້ມງວດ.

ການເຄື່ອນໄຫວຢູ່ 2 ແຂວງ, ໄດ້ຮັບຟັງລາຍງານການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ໂດຍສະເພາະແມ່ນການຕິດຕາມກວດກາວຽກງານຂົງເຂດຍຸຕິທຳຂອງ ສພຂ ໃນໄລຍະຜ່ານມາ ເຫັນວ່າແຕ່ລະພາກສ່ວນໄດ້ຍົກສູງພາລະບົດບາດການເຄື່ອນໄຫວວຽກງານ, ມີຄວາມເອົາໃຈໃສ່ຜັນຂະຫຍາຍບັນດາກົດໝາຍ, ນິຕິກຳຕ່າງໆທີ່ກ່ຽວຂ້ອງກັບວຽກງານຂອງຕົນ; ບັນດາພະແນກການ, ກົມກອງທີ່ກ່ຽວຂ້ອງ ໄດ້ຜັດປ່ຽນກັນຈັດກອງປະຊຸມຖອດຖອນ-ແລກປ່ຽນບົດຮຽນກັນຢູ່ເລື້ອຍໆ, ແຕ່ລະພາກສ່ວນໄດ້ເຂົ້າຮ່ວມແຕ່ຫົວທີໃນຂະບວນການລົງເກັບກຳຂໍ້ມູນກ່ຽວກັບຄະດີຕ່າງໆ. ພ້ອມທັງຮັບຟັງລາຍງານການເຄື່ອນໄຫວວຽກງານຂອງສານປະຊາຊົນ, ອົງການໄອຍະການປະຊາຊົນ, ອົງການສືບສວນ-ສອບສວນແລະພະແນກຍຸຕິທຳໃນການເຄື່ອນໄຫວວຽກງານໄລຍະຜ່ານມາ ເຊິ່ງມີດ້ານດີຫຼາຍດ້ານ ທີ່ໄດ້ເອົາໃຈໃສ່ປະສານສົມທົບກັນໃນການເກັບກຳຂໍ້ມູນພິສູດຫຼັກຖານ, ການສືບສວນ-ສອບສວນ, ສ້າງເງື່ອນໄຂໃຫ້ໄດ້ເຂົ້າຮ່ວມໃນການຊີ້ແຈງ ແລະ ອະທິບາຍເພື່ອຮັບປະກັນໃຫ້ການຕັດສິນຖືກຕ້ອງ; ເອົາໃຈໃສ່ເຜີຍແຜ່ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳຕ່າງໆທີ່ຕິດພັນກັບຂົງເຂດຕົນ; ປັບປຸງກົງຈັກການຈັດຕັ້ງ ແລະ ບຳລຸງສ້າງພະນັກງານລວມທັງແບບແຜນວິທີເຮັດວຽກທີ່ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບສະພາບຕົວຈິງ.

ຄຽງຄູ່ກັບດ້ານດີຍັງມີບາງດ້ານທີ່ຕ້ອງປັບປຸງແກ້ໄຂ ເຊິ່ງປະທານກຳມາທິການຍຸຕິທຳ ໄດ້ເນັ້ນໜັກໃຫ້ພາກສ່ວນກ່ຽວຂ້ອງເອົາໃຈໃສ່ເຊື່ອມຊຶມ, ເຜີຍແຜ່ບັນດາເນື້ອໃນເອກະສານການປະຕິບັດໜ້າທີ່ວຽກງານໃນຂົງເຂດຍຸຕິທຳໃຫ້ກວ້າງຂວາງຕື່ມອີກ; ມີກົນໄກການປະສານງານຂອງແຕ່ລະພາກສ່ວນໃຫ້ກົມກຽວ, ຖືກຕ້ອງສອດຄ່ອງກັບໃນການ ເຄື່ອນໄຫວວຽກງານຂອງແຕ່ລະພາກສ່ວນ ໃຫ້ສຳເລັດຕາມແຜນການທີ່ວາງອອກ.

ປະທານກຳມາທິການຍຸຕິທຳ ພ້ອມດ້ວຍຄະນະ ຍັງໄດ້ພົບປະຄະນະປະຈຳພັກແຂວງ ເພື່ອແຈ້ງໃຫ້ຊາບບາງວຽກງານໃນການເຄື່ອນໄຫວຊຸກຍູ້ຕິດຕາມກວດກາຄັ້ງນີ້ ແລະ ຮັບຟັງສະພາບຈຸດພິເສດຂອງທ້ອງຖິ່ນ ພ້ອມທັງສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄະນະປະຈຳພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ ແລະ ພາກສ່ວນກ່ຽວຂ້ອງທີ່ໄດ້ສ້າງເງື່ອນໄຂອຳນວຍຄວາມສະດວກຮອບດ້ານໃຫ້ແກ່ການເຄື່ອນໄຫວວຽກງານຂອງຄະນະໃນຄັ້ງນີ້ມີຜົນສຳເລັດຢ່າງຈົບງາມຕາມແຜນການວາງໄວ້.

**(ນັກຂາວ ສພຂ ຫົວພັນ ແລະ ບຸນສີ ສິດທິເດດ)**




# ທ່ານ ສຸບັນ ສະອະບຸດ ເຄື່ອນໄຫວວຽກງານຢູ່ 3 ແຂວງ




(ສພຊ) - ວັນທີ 2-7 ກັນຍາ 2024 ທ່ານ ສຸບັນ ສະອະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນພ້ອມດ້ວຍທ່ານ ສີເຮັງ ຫອມສົມບັດ ຮອງເລຂາພັກແຂວງ, ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງ ທັງເປັນປະທານສະພາປະຊາຊົນແຂວງ (ສພຂ) ແລະ ບັນດາທ່ານສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ ໄດ້ເຄື່ອນໄຫວພົບປະປະຊາຊົນບັນດາເຜົ່າຢູ່ 7 ຈຸດ ໃນ 3 ເມືອງຂອງແຂວງສາລະວັນ ຄື: ບ້ານນາຮ່ອງຂາມ, ບ້ານນາຫົວແຮດ, ບ້ານນາກົກຕານ, ບ້ານກອງລີນ້ອຍ ເມືອງວາປີ; ບ້ານໂອກາດໃຫຍ່, ບ້ານແກ້ງໂຫດ ເມືອງຄົງເຊໂດນ; ບ້ານພູດາວແຈ້ງນ້ອຍ ເມືອງລະຄອນເພັງ ເຊິ່ງມີຄະນະພັກຮາກຖານກຸ່ມບ້ານ, ຄະນະອົງການຈັດຕັ້ງບ້ານ ຈາກ 22 ບ້ານ, ພະນັກງານອາວຸໂສບຳນານ, ເຖົ້າແກ່ແນວໂຮມ, ພໍ່ແມ່ປະຊາຊົນ, ຄູ ແລະ ນັກຮຽນ ເຂົ້າຮ່ວມ 794 ຄົນ, ຍິງ 320 ຄົນ; ຈຸດປະສົງເພື່ອລາຍງານການເຄື່ອນໄຫວປະຕິບັດສິດ ແລະ ໜ້າທີ່ຂອງສະມາຊິກສະພາຕໍ່ຜູ້ມີສິດເລືອກຕັ້ງ ໂດຍສະເພາະແມ່ນລາຍງານຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສພຂ ສາລະວັນ ຊຸດທີ II, ຢ້ຽມຢາມຖາມຂ່າວ, ຮັບຟັງຄຳຄິດຄຳເຫັນ, ຄວາມມຸ່ງມາດປາຖະໜາຂອງປະຊາຊົນບັນດາເຜົ່າ.

ການພົບປະໃນແຕ່ລະຈຸດໄດ້ຮັບຟັງລາຍງານສະພາບການພັດທະນາເສດຖະກິດ-ສັງຄົມພາຍໃນບ້ານ. ຫຼັງຈາກນັ້ນ, ສສຊ ແລະ ສສຂ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້ ແລະ ເຂົ້າໃຈ; ຈາກນັ້ນ, ກໍໄດ້ເປີດໂອກາດໃຫ້ມີຄຳເຫັນແລກປ່ຽນ ແລະ ຂໍ້ສະເໜີຕ່າງໆ ເຊິ່ງຂໍ້ສະເໜີດັ່ງກ່າວແມ່ນຕິດພັນກັບຊີວິດການເປັນຢູ່ຂອງປະຊາຊົນ ເປັນຕົ້ນ: ສ້າງເສັ້ນທາງເຂົ້າບ້ານ, ທຶນສ້ອມແປງໂຮງຮຽນ, ຊົນລະປະທານ, ໂທລະໂຄ່ງ ແລະ ອື່ນໆ.

ຜ່ານການຮັບຟັງຂໍ້ສະເໜີຂອງປະຊາຊົນ, ສະມາຊິກສະພາ ກໍຄືພາກສ່ວນກ່ຽວຂ້ອງຂັ້ນເມືອງທີ່ເຂົ້າຮ່ວມພົບປະ ກໍໄດ້ຊີ້ແຈງ, ອະທິບາຍໄປຕາມແຜນການຂອງລັດຖະບານ ກໍຄືຂອງແຂວງ ແລະ ເມືອງ ຕິດພັນກັບເນື້ອໃນກອງປະຊຸມສະໄໝສາມັນເທື່ອທີ 7 ເຊິ່ງຍົກໃຫ້ເຫັນຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ສິ່ງທ້າທາຍໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດ ໂດຍສະເພາະຜົນກະທົບຈາກສະພາບການຂອງໂລກ, ໄພທຳມະຊາດ ແລະ ອື່ນໆ; ຍົກໃຫ້ເຫັນນະໂຍບາຍ, ມາດຕະການທີ່ລັດຖະບານ ກໍຄືທ້ອງຖິ່ນວາງອອກ ເພື່ອສູ້ຊົນຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ. ພ້ອມດຽວກັນນັ້ນ, ກໍຮຽກຮ້ອງໃຫ້ຄະນະພັກ, ອຳນາດການປົກຄອງ ແລະ ປະຊາຊົນບັນດາເຜົ່າ ຈົ່ງເປັນເຈົ້າການເຂົ້າຮ່ວມ ແລະ ປະກອບສ່ວນຈັດຕັ້ງປະຕິບັດຮ່ວມກັບພັກ-ລັດ ເປັນຕົ້ນ: ສືບຕໍ່ປະຕິບັດ 2 ວາລະແຫ່ງຊາດ; ເປັນເຈົ້າການໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ເພີ່ມທະວີການເຕົ້າໂຮມຄວາມສາມັກຄີບັນດາເຜົ່າໃຫ້ເປັນປຶກແຜ່ນ; ສືບຕໍ່ເສີມຂະຫຍາຍແລະຮັກສາມູນເຊື້ອຮີດຄອງປະເພນີອັນດີງາມຂອງເຜົ່າ, ທ້ອງຖິ່ນ ແລະ ຂອງຊາດ; ປະຕິບັດສິດ, ໜ້າທີ່ ແລະ ພັນທະຂອງພົນລະເມືອງ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ເຂັ້ມແຂງ, ຈະເລີນຮຸ່ງເຮືອງຂຶ້ນໄປຢ່າງບໍ່ຢຸດຢັ້ງ.

ໃນການເຄື່ອນໄຫວຄັ້ງນີ້, ຄະນະໄດ້ນຳເອົາອຸປະກອນກິລາ ແລະ ປຶ້ມຂຽນຈຳນວນໜຶ່ງມອບໃຫ້ການຈັດຕັ້ງໃນແຕ່ລະຈຸດເພື່ອນຳໄປແຈກຢາຍໃຫ້ແກ່ນ້ອງນັກຮຽນທີ່ທຸກຍາກຂາດເຂີນ.

ວັນທີ 27 ສິງຫາ - 1 ກັນຍາ, ທ່ານ ສຸບັນ ສະອະບຸດ ຄະນະປະຈຳສະພາແຫ່ງຊາດພ້ອມຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ, ຊຸກຍູ້ວຽກງານພົບປະປະຊາຊົນຂອງ ສສຊ ແລະ ສສຂ ຢູ່ແຂວງອັດຕະປື ແລະ ເຄື່ອນໄຫວເຮັດວຽກຢູ່ເມືອງພູວົງ ແລະ ເມືອງຊານໄຊ; ວັນທີ 8-13 ກັນຍາ ໄດ້ເຄື່ອນໄຫວຢູ່ເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ ໂດຍການຕ້ອນຮັບ ແລະ ຮ່ວມເຮັດວຽກຂອງທ່ານ ບຸນມີ ພິມມະສອນ ຮອງເລຂາພັກແຂວງ, ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທັງເປັນປະທານສພຂ ເຊິ່ງໄດ້ເຮັດວຽກຢູ່ເມືອງນາກາຍ ແລະ ເມືອງໜອງບົກ.

ຜ່ານການເຄື່ອນໄຫວເຮັດວຽກຢູ່ 4 ຕົວເມືອງຂອງ 2 ແຂວງນັ້ນ, ຄະນະ ສສຂ ປະຈຳເຂດເລືອກຕັ້ງເມືອງ ໄດ້ຍົກໃຫ້ເຫັນຂໍ້ສະດວກ, ຂໍ້ຫຍຸ້ງຍາກໃນການເຄື່ອນໄຫວວຽກງານ ໂດຍສະເພາະການພົບປະຜູ້ມີສິດເລືອກຕັ້ງ ເຊິ່ງເຫັນວ່າການເຂົ້າຮ່ວມຂອງປະຊາຊົນບາງຈຸດມີຈຳນວນບໍ່ຫຼາຍ, ການແກ້ໄຂຄຳສະເໜີຂອງປະຊາຊົນຍັງຊັກຊ້າ ບໍ່ໄປຕາມເວລາທີ່ກຳນົດ, ກົນໄກວິທີການແກ້ໄຂບໍ່ລະອຽດ ແລະ ອື່ນໆ; ຈາກນັ້ນ, ກໍໄດ້ເຮັດວຽກກັບຄະນະປະຈຳສພຂຕໍ່ສະພາບການຈັດຕັ້ງປະຕິບັດໜ້າທີ່ຂອງຄະນະ ສສຊ ແລະ ສສຂ. ຕອນທ້າຍ, ທ່ານ ສຸບັນ ສະອະບຸດ ໄດ້ມີຄຳເຫັນແລກປ່ຽນບາງດ້ານເຊັ່ນ: ສະເພາະໜ້າ ແຕ່ນີ້ຮອດທ້າຍສະໄໝຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ຈະຕ້ອງໄດ້ສືບຕໍ່ຈັດຕັ້ງປະຕິບັດວຽກງານຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ ແລະ ສສຂ ໃຫ້ບັນລຸຕາມແຜນທີ່ວາງໄວ້; ວຽກພົບປະຜູ້ມີສິດເລືອກຕັ້ງ ຈະໄດ້ຄົ້ນຄວ້າປັບປຸງນິຕິກຳ ກໍຄືປຶ້ມຄູ່ມືການພົບປະປະຊາຊົນ ໃຫ້ສອດຄ່ອງກວ່າເກົ່າ ແລະ ຮັບປະກັນໃຫ້ວຽກງານດັ່ງກ່າວ ມີປະສິດທິພາບສູງຂຶ້ນ.

**(ຄຳແດງ ອິນທະສັກ ແລະ ໄຈຢ່າງ ມະນີວົງຢ່າລື)**

# ປັບປຸງເນື້ອໃນປຶ້ມ 49 ຊົນເຜົ່າ ເພື່ອຈັດພິມປຶ້ມ 50 ຊົນເຜົ່າ




(ສພຊ)-ວັນທີ 16-17 ກັນຍາ 2024 ທີ່ເມືອງວັງວຽງ ແຂວງວຽງຈັນ ໄດ້ມີກອງປະຊຸມສຳມະນາລະດົມຄວາມຄິດເຫັນກ່ຽວກັບການນຳໃຊ້ປຶ້ມ 49 ຊົນເຜົ່າເພື່ອຈັດພິມປຶ້ມ 50 ຊົນເຜົ່າໃນວົງຄະນະຍາດແຫ່ງຊາດລາວ ຂອງກຳມາທິການບັນດາເຜົ່າ (ກບຜ) ໂດຍການເປັນປະທານຂອງທ່ານ ຄຳຈັນ ໂສຕາປະເສີດ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການບັນດາເຜົ່າ; ເຂົ້າຮ່ວມມີຮອງປະທານສູນກາງແນວລາວສ້າງຊາດ, ຮອງປະທານສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ, ບັນດາຮອງປະທານກຳມາທິການ ແລະ ຄະນະກຳມະການຂອງ ກບຜ ຈາກ 18 ເຂດເລືອກຕັ້ງທົ່ວປະເທດ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ.

ທ່ານ ຄຳຈັນ ໂສຕາປະເສີດ ກ່າວວ່າ: ກອງປະຊຸມສຳມະນາຄັ້ງນີ້ແມ່ນເພື່ອຄົ້ນຄວ້າແລະລະດົມຄວາມຄິດເຫັນຕໍ່ການປັບປຸງເນື້ອໃນປຶ້ມ 49 ຊົນເຜົ່າເພື່ອຈັດພິມປຶ້ມ 50 ຊົນເຜົ່າ ໃນວົງຄະນະຍາດແຫ່ງຊາດລາວ ໃຫ້ເປັນປຶ້ມທີ່ຖືກຕ້ອງສອດຄ່ອງກັບສະພາບຄວາມເປັນຈິງ, ຖືກຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່; ເພື່ອຄວາມເປັນເອກະພາບດ້ານເນື້ອໃນຂອງປຶ້ມ 50 ຊົນເຜົ່າ ຂອງກຳມາທິການບັນດາເຜົ່າ ທັງເປັນການຖອດຖອນບົດຮຽນ, ສັງລວມຂໍ້ມູນ ເພື່ອເຜີຍແຜ່ໃຫ້ຄວາມຮູ້ຄວາມເຂົ້າໃຈກ່ຽວກັບຊື່ເອີ້ນ ແລະ ຈຳນວນຊົນ ເຜົ່າໃນ ສປປ ລາວ.

ໃນກອງປະຊຸມໄດ້ຮັບຟັງຜົນການຕີລາຄາການເຜີຍແຜ່ ແລະ ຈັດຕັ້ງປະຕິບັດມະຕິຂອງສະພາແຫ່ງຊາດ ສະບັບເລກທີ 213/ສພຊ, ລົງວັນທີ 24 ພະຈິກ 2018 ກ່ຽວກັບການຮັບຮອງເອົາຊື່ເອີ້ນ ແລະ ຈຳນວນຊົນເຜົ່າ; ມະຕິຂອງສະພາແຫ່ງຊາດ ສະບັບເລກທີ 108/ສພຊ, ລົງວັນທີ 05 ທັນວາ 2018 ວ່າດ້ວຍການຮັບຮອງເອົາຊົນເຜົ່າບຣູ; ການຈັດຕັ້ງປະຕິບັດດຳລັດວ່າດ້ວຍວຽກງານຊົນເຜົ່າ ສະບັບເລກທີ 207/ລບ, ລົງວັນທີ 20 ມີນາ 2020; ວິທີການ, ຂັ້ນຕອນຄົ້ນຄວ້າ ແລະ ພິຈາລະນາຊື່ເອີ້ນຊົນເຜົ່າໃນ ສປປ ລາວ; ການປັບປຸງເນື້ອໃນປຶ້ມ 49 ຊົນເຜົ່າ ເປັນປຶ້ມ 50 ຊົນເຜົ່າ ໃນວົງຄະນະຍາດແຫ່ງຊາດລາວ. ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ຜັດປ່ຽນກັນປະກອບຄຳຄິດຄຳເຫັນຢ່າງມີຈຸດສຸມ, ກົງໄປກົງມາ ເພື່ອເຮັດໃຫ້ການປັບປຸງປຶ້ມດັ່ງກ່າວ ມີເນື້ອໃນຄົບຖ້ວນສົມບູນ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ກົງທະນູຄຳ ພິພັດເສລີ)**

# ປຶກສາຫາລືເນື້ອໃນແຜ່ນພັບຂອງ ສພຊ ແລະ ສພຂ



(ສພຊ) - ກອງປະຊຸມປຶກສາຫາລືກ່ຽວກັບເນື້ອໃນແຜ່ນພັບຂອງສະພາແຫ່ງຊາດ (ສພຊ) ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ໄດ້ຈັດຂຶ້ນໃນວັນທີ 16-17 ກັນຍາ 2024 ທີ່ທ່າລາດ ແຂວງວຽງຈັນ ໂດຍການເປັນປະ ທານຂອງທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ (ກວສຊ); ເຂົ້າຮ່ວມມີບັນດາທ່ານຮອງປະທານ ກວສຊ ແລະ ກຳມາທິການທີ່ກ່ຽວຂ້ອງ, ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ ພ້ອມດ້ວຍຄະນະກົມ, ຄະນະພະແນກ ແລະ ພະນັກງານພາຍໃນ ສພຊ.

ທ່ານ ສຸບັນ ສະວະບຸດ ກ່າວວ່າ: ຈຸດປະສົງການສ້າງແຜ່ນພັບໃນຄັ້ງນີ້ ແນໃສ່ເຮັດໃຫ້ຖັນແຖວສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ-ຕຳຫຼວດ ແລະ ປະຊາຊົນລາວບັນດາເຜົ່າໄດ້ຮັບຮູ້, ເຊື່ອມຊຶມ ແລະ ຕິດຕາມ, ຊຸກຍູ້ການປະຕິບັດພາລະບົດບາດຂອງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ວຽກງານການເລືອກຕັ້ງ; ເພື່ອເປັນຂໍ້ມູນ ແລະ ບ່ອນອີງໃຫ້ແກ່ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະພາແຫ່ງຊາດ ໃນການເຄື່ອນໄຫວໂຄສະນາ, ເຜີຍແຜ່ ໃຫ້ມີຄວາມເລິກເຊິ່ງ ແລະ ກວ້າງຂວາງດ້ວຍຫຼາຍວິທີ, ຫຼາຍຮູບການ, ສະດວກສະບາຍ, ກະທັດຮັດ ແລະ ສາມາດຈັດຕັ້ງປະຕິບັດໄດ້.

ໃນກອງປະຊຸມ, ຫຼັງຈາກໄດ້ຮັບຟັງບົດສະເໜີກ່ຽວກັບເນື້ອໃນການສ້າງແຜ່ນພັບຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ຜູ້ເຂົ້າຮ່ວມໄດ້ຜັດປ່ຽນກັນປະກອບຄຳເຫັນຕໍ່ບັນຫາຕ່າງໆເຊັ່ນ: ເນື້ອໃນກຳນົດເຂົ້າແຜ່ນພັບ, ໂຄງສ້າງແລະຮູບແບບແຜ່ນພັບ ເພື່ອເປັນການລະດົມແນວຄວາມຄິດ, ສະຕິປັນຍາຂອງຜູ້ເຂົ້າຮ່ວມ ໃນການຄົ້ນຄວ້າສ້າງແຜ່ນພັບ ທີ່ມີລັກສະນະວິທະຍາສາດ ເຮັດໃຫ້ແຜ່ນພັບເປັນເຄື່ອງມືໂຄສະນາທີ່ເປັນປະໂຫຍດ ແລະ ຜ່ານແຜ່ນພັບນີ້ ຈະເຮັດໃຫ້ສັງຄົມມີຄວາມຮັບຮູ້ເຂົ້າໃຈ ສພຊ ແລະ ສພຂ ຫຼາຍຂຶ້ນຕື່ມ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂງຫຼືສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ສອນສັກ ວັນວິໄຊ)**

# ຮຽບຮຽງການແປເອກະສານກອງປະຊຸມ AIPA



(ສພຊ)-ວັນທີ 18-20 ກັນຍາ 2024 ທີ່ສະພາແຫ່ງຊາດ ໄດ້ຈັດກອງປະຊຸມກວດແກ້ປັບປຸງ ແລະ ຮຽບຮຽງການແປລະບຽບການແລະເອກະສານກ່ຽວຂ້ອງຕ່າງໆຂອງກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ຈາກລາວເປັນອັງກິດ ແລະ ຈາກອັງກິດເປັນລາວ, ໂດຍການເປັນປະທານຂອງທ່ານ ຈັນທະວົງ ແສນອາມາດມົນຕີ ຮອງປະທານກຳມາທິການການຕ່າງປະເທດ, ມີຄະນະຮັບຜິດຊອບເນື້ອໃນດ້ານຕ່າງໆເຂົ້າຮ່ວມຢ່າງພ້ອມພຽງ; ທັງນີ້ກໍເພື່ອຮັບປະກັນໃຫ້ເນື້ອໃນເອກະສານຕ່າງໆມີຄວາມສົມບູນຂຶ້ນກວ່າເກົ່າ, ຖືກຕ້ອງຕາມແນວທາງ ແລະ ສອດຄ່ອງກັບຄຳສັບທາງການໃນດ້ານວຽກງານຕ່າງໆ.

ໃນກອງປະຊຸມ ໄດ້ມີການສະເໜີແຕ່ລະເນື້ອໃນຄື: ເອກະສານທຳມະນູນໄອປາ, ຄູ່ມືລະບຽບການ ແລະ ຂະບວນການໃນການເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ໄອປາ, ປຶ້ມຄູ່ມື ແລະ ຂັ້ນຕອນດຳເນີນກອງປະຊຸມລະຫວ່າງອາຊຽນກັບໄອປາ, ປຶ້ມຄູ່ມືກ່ຽວກັບການຮ່າງມະຕິຂອງໄອປາ, ພາລະບົດບາດຂອງກອງປະຊຸມສະມາຊິກລັດຖະສະພາເພດຍິງໄອປາ, ລະບຽບການດຳເນີນກອງປະຊຸມສະມາຊິກລັດຖະສະພາໜຸ່ມໄອປາ, ພາລະບົດບາດຂອງກອງປະຊຸມສະພາທີ່ປຶກສາ ກ່ຽວກັບພິນຮ້າຍຂອງຢາເສບຕິດໄອປາ, ປຶ້ມຄູ່ມື ແລະ ອຸປະກອນເຝິກອົບຮົມທຸກຢ່າງ, ຄູ່ມືກ່ຽວກັບການຮ່າງຂອບແນວຄວາມຄິດຂອງໄອປາ, ຄູ່ມືກ່ຽວກັບການຮ່າງບົດອະທິບາຍ, ບາງຮ່າງມະຕິຈາກພາສາອັງກິດເປັນພາສາລາວ/ຈາກພາສາລາວເປັນພາສາອັງກິດ; ຈາກນັ້ນ, ໄດ້ຮ່ວມກັນກວດແກ້ ແລະ ປັບປຸງບັນດາຄຳສັບໃຫ້ເປັນຄຳສັບທາງການ, ຖືກຕ້ອງສອດຄ່ອງກັບແນວທາງ ພ້ອມທັງປະກອບຄຳຄິດເຫັນໃນການກວດແກ້ແຕ່ລະເອກະສານ.

**(ອານຸສອນ ພຸມມີທອນ)**

# ສຳເລັດການເຂົ້າຮ່ວມກອງປະຊຸມເວທີປຶກສາຫາລືສະມາຊິກລັດຖະສະພາອາຊີ-ປາຊີຟິກ ກ່ຽວກັບສຸຂະພາບໂລກ ຄັ້ງທີ 8



(ສພຊ) - ຄະນະຜູ້ແທນສະພາແຫ່ງຊາດ ນຳໂດຍທ່ານ ດຣ. ບຸນລ້ອມ ແກ້ວບົວໂຮມ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ ໄດ້ເຂົ້າຮ່ວມກອງປະຊຸມເວທີປຶກສາຫາລືສະມາຊິກລັດຖະສະພາອາຊີ-ປາຊີຟິກ ກ່ຽວກັບສຸຂະພາບໂລກຄັ້ງທີ 8 (Eighth Meeting of theAsia-PacificParliamentarian Forum on Global Health) ໃນລະຫວ່າງວັນທີ 31 ສິງຫາ-12 ກັນຍາ 2024 ທີ່ນະຄອນຫຼວງປອກວິລາ (Port Vila) ສາທາລະນະລັດວານູອາຕູ (Vanuatu) ໂດຍການເປັນເຈົ້າພາບຂອງຄະນະກຳມາທິການສາທາລະນະສຸກປະເທດວານູອາຕູ, ພາຍໃຕ້ການສະໜັບສະໜູນຂອງອົງການອະນາໄມໂລກ ປະຈຳພາກພື້ນອາຊີ-ປາຊີຟິກຕາເວັນຕົກ ແລະ ລະຫວ່າງວັນທີ 4-6 ກັນຍາພາຍໃຕ້ຫົວຂໍ້ "ການເສີມສ້າງບຸກຄະລາກອນສາທາລະນະສຸກໃນລະດັບພາກພື້ນ ແລະ ສາກົນ"; ກອງປະຊຸມຄັ້ງນີ້ ມີສະມະຊິກລັດຖະສະພາ 32 ທ່ານ ທີ່ມາຈາກ 13 ປະເທດເຂົ້າຮ່ວມຄື: ລາຊະອານາຈັກກຳປູເຈຍ, ໝູ່ເກາະກຸກ (Cook Islands), ສ.ເກົາຫຼີ, ສປປລາວ, ມາເລເຊຍ, ນີອູ (Niue), ຟີລິບປິນ, ຊາມົວ, ໝູ່ເກາະຊາໂລມົງ, ລາຊະອານາຈັກໄທ, ຕົງກາ, ວານູອາຕູ ແລະ ສສ.ຫວຽດນາມ.

ຈຸດປະສົງຂອງກອງປະຊຸມແມ່ນເພື່ອສະເໜີ ແລະ ຮັບເອົາຫຼັກການໃໝ່ກ່ຽວກັບຈຸດເລີ່ມຕົ້ນ ແລະ ແນວທາງທີ່ຈະເພີ່ມຄວາມເຂັ້ມແຂງໃຫ້ແກ່ນະໂຍບາຍສ້າງບຸກຄະລາກອນສາທາລະນະສຸກສຳລັບອະນາຄົດ ໃຫ້ສອດຄ່ອງກັບພາກພື້ນອາຊີ-ປາຊີຟິກ; ແລກປ່ຽນປະສົບການຂອງບັນດາປະເທດສະມາຊິກ ເພື່ອສະໜັບສະໜູນນະໂຍບາຍສ້າງບຸກຄະລາກອນຜ່ານຫຼາຍຈຸດເລີ່ມຕົ້ນຂອງລະບົບເຊັ່ນ: ການອະນຸມັດງົບປະມານ, ການດຳເນີນໂດຍລັດຖະບານ, ພາກເອກະຊົນ ແລະ ການປັບປຸງກົດໝາຍ; ສະເໜີ ແລະ ແບ່ງປັນສິ່ງໃໝ່ໆເຂົ້າໃນການພັດທະນາວຽກ

ອ່ານຕໍ່ໜ້າ 7

# ປະທານ ສພຂ ໄຊຍະບູລີ ຢ້ຽມຢາມຜູ້ປະສົບໄພນໍ້າຖ້ວມ




(ສພຂ) - ໃນລະຫວ່າງວັນທີ 3-4 ກັນຍາ 2024 ຜ່ານມານີ້ ທ່ານ ເພັງນີລັນ ຄຳພັນເພັງ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງໄຊຍະບູລີ, ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢ້ຽມຢາມສະຖານຈຸດທີ່ເກີດໄພພິບັດນໍ້າຖ້ວມຢູ່ 4 ຄື: ເມືອງຄອບ, ເມືອງຊຽງຮ່ອນ, ເມືອງເງິນ ແລະ ເມືອງທົ່ງສາ. ໃຫ້ກຽດຕ້ອນຮັບຂອງບັນດາເລຂາພັກເມືອງ, ຄະນະນຳເມືອງ ແລະ ຂະແໜງການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ; ການລົງເຄື່ອນໄຫວຄັ້ງນີ້ ໄດ້ຮັບຟັງການລາຍງານຜົນເສຍຫາຍຂອງບັນດາເມືອງດັ່ງກ່າວວ່າ: ໃນຄືນວັນທີ 21 ສິງຫາຜ່ານມານັ້ນ ໄດ້ມີຝົນຕົກໜັກ ເຮັດໃຫ້ມີນໍ້າໜອງໄຫຼຊຸຖ້ວມເອົາເຮືອນ, ສັດລ້ຽງ, ເນື້ອທີ່ນາ, ຮົ້ວສວນ, ໜອງປາ, ຊົນລະປະທານ, ໄຟຟ້າ ແລະ ນໍ້າປະປາ ຂອງປະຊາຊົນໄດ້ຮັບຜົນເສຍຫາຍເບື້ອງຕົ້ນ, ໂດຍສະເພາະແມ່ນບ້ານ ທີ່ຕັ້ງຢູ່ແຄມແມ່ນໍ້າສາຍຫຼັກຂອງເມືອງຄື: ເມືອງຄອບ ມີ 10 ບ້ານ, 1.331 ຄອບຄົວ, ຈຳນວນພົນ 5.857 ຄົນ, ຍິງ 2.702 ຄົນ. ມູນຄ່າເສຍຫາຍທັງໝົດ 26.776. 307 467 ກີບ. ໄດ້ນຳເອົາເງິນສົດມາມອບຈຳນວນ 30 ລ້ານກີບ (ທຶນສົມທົບ 10 ລ້ານກີບ); ເມືອງຊຽງຮ່ອນ ຈຳນວນ 9 ບ້ານ, ມີຄອບຄົວທີ່ໄດ້ຮັບຜົນກະທົບທັງໝົດ 300 ກວ່າຄອບຄົວ ພົນລະເມືອງທັງໝົດ 1,319 ຄົນ ຍິງ 673 ຄົນ. ໄດ້ມອບເງິນສົດ ຈຳນວນ 10 ລ້ານກີບ; ເມືອງເງິນມີ 3 ບ້ານ 64 ຄອບຄົວ, ຈຳນວນພົນ 320 ຄົນ, ຍິງ 102 ຄົນ. ມູນຄ່າເສຍຫາທັງໝົດ 17. 073 373 ກີບ, ໄດ້ມອບເງິນ 7 ບ້ານ ແລະ ເມືອງທົ່ງສາ ມີ 2 ບ້ານ 14 ຄອບຄົວ, ຈຳນວນພົນ 72 ຄົນ, ຍິງ 31 ຄົນ ມູນຄ່າເສຍຫາຍທັງໝົດ 885.620.000 ກີບ; ລວມມູນຄ່າຈຳນວນເງິນທັງໝົດທີ່ນຳມອບ ໃນຄັ້ງນີ້ 47 ລ້ານກີບ. ເພື່ອສົມທົບທຶນການຊ່ວຍເຫຼືອເບື້ອງຕົ້ນໃຫ້ກັບພໍ່ແມ່ປະຊາຊົນຜູ້ຖືກຜົນກະທົບຈາກໄພພິບັດນໍ້າຖ້ວມ.

ພ້ອມກັນນັ້ນ, ອົງການປົກຄອງເມືອງດັ່ງກ່າວ ໄດ້ມອບທຶນສົມທົບຊ່ວຍເຫຼືອໃນຄັ້ງນີ້ ຕາງໜ້າອົງການປົກຄອງເມືອງ ກໍຄືຕາງໜ້າໃຫ້ແກ່ປະຊາຊົນຊາວເມືອງ ພ້ອມທັງກ່າວສະແດງຂອບໃຈຕໍ່ສະພາປະຊາຊົນແຂວງ ຍາມໃດກໍເປັນຫວ່ງເປັນໄຍໃຫ້ຄວາມຊ່ວຍເຫຼືອ ແລະ ທ່ານຍັງໃຫ້ຄຳໝັ້ນວ່າຈະນຳໃຊ້ເງິນຈຳນວນດັ່ງກ່າວນີ້ໄປຊ່ວຍເຫຼືອໃຫ້ກັບພໍ່, ແມ່ປະຊາຊົນ ຜູ້ທີ່ຖືກຜົນກະທົບຈາກໄພພິບັດນໍ້າຖ້ວມໃນຄັ້ງນີ້ໄດ້ຮັບຢ່າງທົ່ວເຖິງ.

ແລະ ຢູ່ທີ່ຫ້ອງວ່າການເມືອງຄອບແລະເມືອງຊຽງຮ່ອນ ແຂວງໄຊຍະບູລີ. ໄດ້ມອບເຄື່ອງຊ່ວຍເຫຼືອຜູ້ປະສົບໄພພິບັດນໍ້າຖ້ວມ ໂດຍໃຫ້ກຽດຕາງໜ້າມອບຂອງທ່ານ ເພັງນີລັນ ຄຳພັນເພັງ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ, ເປັນກຽດກ່າວຮັບຂອງທ່ານ ເຈົ້າເມືອງ ຄະນະນຳອົງການປົກຄອງເມືອງ ຂອງເມືອງດັ່ງກ່າວ.

ເຄື່ອງທີ່ນຳມາມອບໃຫ້ເມືອງຄອບມີຄື: ນໍ້າດື່ມ 110 ແພັກ, ສັງກະສີ 285 ແຜ່ນ, ເຂົ້າສານ 792 ກິໂລ, ເຄື່ອງໃນຄົວເຮືອນ 7 ແກັດ, ມຸ້ງ 7 ດາງ, ສາດ 7 ຜືນ, ຜ້າຫົ່ມ 7 ຜືນ, ເກີບ ແລະ ອື່ນໆ ລວມມູນຄ່າ 171,058000 ກີບແລະເມືອງຊຽງຮ່ອນມີຄື: ເຂົ້າສານ 1 ໂຕນ, ນໍ້າດື່ມ 150 ແພັກ, ສັງກະສີ 395 ແຜ່ນ, ຕຽງນອນ ແລະ ເຄື່ອງນອນ 10 ຊຸດລວມມູນຄ່າ 72, 850 000 ກີບ. ລວມມູນຄ່າທັງໝົດ 243, 908000 ກີບ.

**(ອິນທີ ຊຽວສີຟ້າ)**

# ຮອງປະທານສະພາປະຊາຊົນແຂວງຊຽງຂວາງ ຕິດຕາມ ກວດກາວຽກງານການສຶກສາຢູ່ເມືອງໜອງແຮດ

(ສພຂ) - ເພື່ອປະຕິບັດຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 16/ຄປຈ, ລົງວັນທີ 26 ກໍລະກົດ 2024 ວ່າດ້ວຍ ການຕິດຕາມກວດກາການຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດແຫ່ງຊາດໃນໄລຍະຜ່ານມາ ແລະ ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ; ໃນລະຫວ່າງວັນທີ 9-10 ກັນຍາ 2024 ທ່ານ ນ. ສົມພອນ ໂສພິລາວັນ ຮອງປະທານສະພາປະຊາຊົນແຂວງ, ຜູ້ຊີ້ນຳວຽກງານວັດທະນະທຳ, ສັງຄົມ ແລະ ບັນດາເຜົ່າ ແລະ ທ່ານ ຄຳແພງ ທຳມະວອນ ປະທານຄະນະກຳມະການວັດທະນະທຳ, ສັງຄົມ ແລະ ບັນດາເຜົ່າ ພ້ອມດ້ວຍທີມງານ ລົງຊຸກຍູ້ ແລະຕິດຕາມກວດກາວຽກງານການສຶກສາຢູ່ເມືອງໜອງແຮດ ເປັນກຽດເຂົ້າຮ່ວມຂອງທ່ານ ນາງ ດວງສີ ວີ່ ຮອງເຈົ້າເມືອງໆໜອງແຮດ, ຜູ້ຊີ້ນຳວຽກງານວັດທະນະທຳ, ສັງຄົມ ແລະ ບັນດາເຜົ່າ; ມີບັນດາທ່ານຫົວໜ້າ-ຮອງຫົວໜ້າຫ້ອງການ ແລະ ພະນັກງານ ທີ່ກ່ຽວຂ້ອງເຂົ້າຮ່ວມ.



ໃນການລົງເຄື່ອນໄຫວ ໄດ້ຮັບຟັງການລາຍງານຂອງຕາງໜ້າບັນດາຫ້ອງການທີ່ກ່ຽວຂ້ອງ ໃນໄລຍະຜ່ານມາ ຕາມຄຳຖາມເຈາະຈີ້ມຂອງສະພາປະຊາຊົນແຂວງ ກ່ຽວກັບຍຸດທະສາດການປະຕິຮູບການສຶກສາ ແລະ ແຜນພັດທະນາຊັບພະຍາກອນມະນຸດແຫ່ງຊາດ, ການຈັດຕັ້ງປະຕິບັດນະໂນບາຍຕໍ່ກັບນັກຮຽນທີ່ຮຽນດີຮຽນເກັ່ງ ແຕ່ບໍ່ມີທຶນໃນການຮໍ່າຮຽນ, ການສ້າງ ແລະປັບປຸງໂຮງຮຽນລ້ຽງເດັກ-ອະນຸບານ ແລະ ໂຮງຮຽນມັດທະຍົມຕົ້ນ ໃຫ້ໄດ້ມາດຕະຖານ ພ້ອມທັງສະໜອງຄູ ແລະ ອຸປະກອນການຮຽນ-ການສອນໃຫ້ຄົບຊຸດ ແລະ ພຽງພໍ ເພື່ອໃຫ້ເດັກໃນເກນອາຍຸ 3-5 ປີ ໄດ້ກຽມຄວາມພ້ອມກ່ອນເຂົ້າຮຽນຊັ້ນປະຖົມ, ການລົງທຶນຂອງລັດ ໃສ່ການພັດທະນາໂຄງລ່າງພື້ນຖານການສ້າງສິ່ງອຳນວຍຄວາມສະດວກ, ພ້ອມທັງການສ້າງ ແລະ ພັດທະນາພະນັກງານ-ລັດຖະກອນ ແລະ ການສົ່ງເສີມສຸຂະພາບ ແລະ ພະລານາໄມສົມບູນ ກ່ຽວກັບການບັນລຸ 4 ຈຸດປະສົງ, 10 ຄາດໝາຍແລະ 5 ວຽກຈຸດສຸມ ໃນຂະແໜງການສຶກສາທິການ ແລະ ກິລາ.

ໃນໂອກາດດັ່ງກ່າວ ທີມງານຍັງລົງພົບປະຢູ່ໂຮງຮຽນປະຖົມຖໍ້າໄຊເພື່ອຮັບຟັງການລາຍງານຄຳຄິດຄຳເຫັນຂອງບັນດາຄູ ໃນການສິດ-ສອນນັກຮຽນຕົວຈິງ ໃນໄລຍະຜ່ານມາທຽບໃສ່ປັດຈຸບັນ, ໃນການປະຕິບັດນະໂຍບາຍຂອງໂຮງຮຽນຕໍ່ກັບນັກຮຽນ ທີ່ຮຽນດີຮຽນເກັ່ງ ທີ່ບໍ່ມີທຶນຮຽນຕໍ່ ເພື່ອຊ່ວຍເຫຼືອ ແລະ ສ້າງເງື່ອນໄຂໃຫ້ນັກຮຽນໄດ້ຮຽນຈົບ.

**(ບຸນສີ ສິດທິເດດ)**

# ສະພາປະຊາຊົນແຂວງບໍລິຄຳໄຊ ເຜີຍແຜ່ ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7

(ສພຂ) - ໃນວັນທີ 10 ກັນຍາ 2024, ຢູ່ທີ່ຫ້ອງປະຊຸມປົກຄອງເມືອງປາກກະດິງ ໄດ້ຈັດພິທີເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງບໍລິຄຳໄຊ ຊຸດທີ II ໂດຍການເປັນປະທານຂອງ ທ່ານ ສຸວັນນີ ໄຊຊະນະ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງບໍລິຄຳໄຊ. ມີບັນດາຄະນະປະຈຳພັກເມືອງ, ຄະນະຫ້ອງການ, ຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງ, ພະນັກງານຫຼັກແຫຼ່ງພາຍໃນເມືອງເຂົ້າຮ່ວມຮັບຟັງ.




ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງບໍລິຄຳໄຊ ຊຸດທີ II ແມ່ນເຫດການການເມືອງທີ່ສຳຄັນທາງປະຫວັດສາດຂອງພັກເຮົາ, ເປັນກອງປະຊຸມສືບຕໍ່ຢຶດໝັ້ນ ແລະ ເພີ່ມເຕີມເສີມຂະຫຍາຍແນວທາງປ່ຽນແປງໃໝ່ຮອບດ້ານທີ່ມີຫຼັກການຂອງພັກ ເຂົ້າສູ່ລວງເລິກ ແລະ ກຳນົດທັດສະນະແຫ່ງການສ້າງການຫັນປ່ຽນຢ່າງແຂງແຮງຕໍ່ການນຳພາ-ຊີ້ນຳປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ຈະເລີນຮຸ່ງເຮືອງກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມຕາມທີ່ພັກ-ລັດເຮົາວາງໄວ້; ການຈັດຕັ້ງເຊື່ອມຊຶມຜົນສຳເລັດກອງປະຊຸມໃນຄັ້ງນີ້ ກໍເພື່ອແນໃສ່ເຮັດໃຫ້ພະນັກງານນຳພາຫຼັກແຫຼ່ງ-ນຳພາຄຸ້ມຄອງແຕ່ລະຂັ້ນ ພາຍໃນເມືອງ ໄດ້ຮັບຮູ້ເຂົ້າໃຈຢ່າງເລິກເຊິ່ງແລະກຳແໜ້ນເນື້ອໃນ ມະຕິຄຳສັ່ງແລະວຽກງານຈຸດສຸມໃນດ້ານຕ່າງໆ ທີ່ຕ້ອງເອົາໃຈໃສ່ນຳພາ-ຊີ້ນຳຢູ່ໃນແຕ່ລະຂົງເຂດວຽກງານຕາມຄວາມຮັບຜິດຊອບ, ຕິດພັນກັບການເສີມຂະຫຍາຍຄວາມເປັນເຈົ້າການໃນການນຳພາ-ຊີ້ນຳຈັດຕັ້ງປະຕິບັດໃຫ້ເປັນແຜນງານ, ເປັນໂຄງການ ແລະ ກິດຈະກຳລະອຽດໃນແຕ່ລະຂະແໜງການທ້ອງຖິ່ນຮາກຖານ ເພື່ອຈັດຕັ້ງປະຕິບັດໃຫ້ເກີດດອກອອກຜົນຕົວຈິງ, ສ້າງໄດ້ຜົນສຳເລັດໃໝ່ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ນອກຈາກນີ້ ກໍເພື່ອເຮັດໃຫ້ບັນດາຜູ້ເຂົ້າຮ່ວມເຊື່ອມຊຶມ ໄດ້ພ້ອມກັນປະກອບຄຳຄິດເຫັນ-ສົນທະນາແລກປ່ຽນ, ບັນຫາຕ່າງໆ ຕໍ່ກັບ ສສຊ-ສສຂ ເພື່ອນຳເອົາເຫດ ແລະ ຜົນໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ນຳໄປສົມທົບກັບຂະແໜງການ, ເມືອງ, ແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄ້ວາພິຈາລະນາປັບປຸງ-ແກ້ໄຂຕາມຂັ້ນຕອນ ແລະ ລະບຽບການວາງອອກ. ເພື່ອແນ່ໃສ່ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າມີຄວາມໜັກແໜ້ນເຂັ້ມແຂງ, ຖືກຕ້ອງ-ສອດຄ່ອງຕາມສະພາບຄວາມເປັນຈິງ ແລະ ທັນເຂົ້າສູ້ລະບຽບກົດໝາຍເທື່ອລະກ້າວ.

ໃນຕອນບ່າຍຂອງວັນທີ 12 ກັນຍາ 2024 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໄດ້ມີພິທີລົງນາມເຊັນບົດບັນທຶກວຽກງານການປະສານງານ ຮ່ວມກັນລະຫວ່າງ ຄະນະກຳມະການເສດຖະກິດແຜນການ ແລະ ການເງິນ ແລະ ອົງການກວດສອບປະຈຳພາກກາງ 2 ໂດຍທ່ານ ສີສະຫວາດ ທັນທະບຸນ ປະທານຄະນະກຳມະການເສດຖະກິດແຜນການ ແລະ ການເງິນ ແລະ ທ່ານ ອຸໄພວັນ ໄຊຍະວົງ ອົງການກວດສອບປະຈຳພາກກາງ2, ມີພາກສ່ວນທີ່ກ່ຽວຂ້ອງທັງສອງຝ່າຍເຂົ້າຮ່ວມເປັນສັກຂີພິຍານ.

ເນື້ອໃນບົດບັນທຶກການປະສານງານສະບັບນີ້ ປະກອບດ້ວຍ 3 ໝວດ 6 ມາດຕາ ເຊິ່ງໄດ້ກຳນົດຫຼັກການ, ເນື້ອໃນ, ວິທີການປະສານງານ ແລະ ມາດຕະການຈັດຕັ້ງປະຕິບັດລະຫວ່າງ ຄະນະກຳມະການເສດຖະກິດແຜນການ ແລະ ການເງິນ ສະພາປະຊາຊົນແຂວງກັບອົງການກວດສອບພາກກາງ2 ກ່ຽວກັບການເຄື່ອນໄຫວວຽກງານ, ແນໃສ່ຈັດຕັ້ງຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ໃນການຄຸ້ມຄອງ, ກວດກາ, ຊຸກຍູ້ສົ່ງເສີມ ໃຫ້ເຂັ້ມແຂງ, ມີປະສິດທິຜົນ, ໂປ່ງໃສ, ປະຢັດ ແລະ ສອດຄ່ອງກັບກົດໝາຍ ເພື່ອຮັບໃຊ້ໃຫ້ແຜນພັດທະນາເສດຖະກິດ-ສັງຄົມ, ເພື່ອຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈ ຂອງກົດໝາຍວ່າດ້ວຍ ສະພາປະຊາຊົນແຂວງ ແລະ ມະຕິຂອງສະພາປະຊາຊົນແຂວງ ຮັບປະກັນໃຫ້ແກ່ການພົວພັນປະສານງານລະຫວ່າງ ຄະນະກຳມະການເສດຖະກິດແຜນການແລະການເງິນ ສະພາປະຊາຊົນແຂວງ ກັບອົງການກວດສອບປະຈຳພາກກາງ 2 ທັນເຂົ້າສູ່ຫຼັກການ, ສອດຄ່ອງກັບລະບຽບກົດໝາຍ ແລະ ທັງຮັບປະກັນຄຸນນະພາບ ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ.

**(ໂສລະຢາ)**



## ກອດກາ...

(ຕໍ່ຈາກໜ້າ 1)

ໄຊຍະຈັກ ໄດ້ກ່າວເນັ້ນໜັກເຖິງຄວາມສຳຄັນ ແລະ ຄວາມຈຳເປັນຂອງກອງປະຊຸມຄັ້ງນີ້ເພາະເປັນກອງປະຊຸມຄົ້ນຄວ້າກວດກາເນື້ອໃນຮອບດ້ານຂອງສອງຮ່າງກົດໝາຍດັ່ງກ່າວຢ່າງລະອຽດແນໃສ່ເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍທັງສອງສະບັບມີຄວາມຄົບຖ້ວນ, ຮັດກຸມກວ່າເກົ່າ ເພື່ອສະຫຼຸບລາຍງານຂໍຄຳເຫັນຂອງກອງປະຊຸມຄະນະປະຈຳສະພາແຫ່ງຊາດ ເພື່ອກ້າວໄປຫາຂັ້ນຕອນນຳເອົາໄປທາບທາມຄຳເຫັນກັບບັນດາສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະແນກການທີ່ກ່ຽວຂ້ອງ ກ່ອນນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ທີ່ຈະໄຂຂຶ້ນໃນທ້າຍປີນີ້.

ທ່ານ ນາງ ອາລີ ວົງໜໍ່ບຸນທຳ ໄດ້ແຈ້ງໃຫ້ທີ່ປະຊຸມຊາບວ່າກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວສະບັບປັດຈຸບັນ ໄດ້ປະກາດໃຊ້ແຕ່ປີ 2013 ເຊິ່ງມາເຖິງປັດຈຸບັນ, ອີງໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນແຕ່ລະໄລຍະ ແລະ ພາລະບົດບາດ, ໜ້າທີ່ໄດ້ມີການປັບປຸງໄປຕາມແຕ່ລະສະໄໝກອງປະຊຸມ. ສະນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງໄດ້ປັບປຸງກົດໝາຍສະບັບນີ້ຄືນໃໝ່ ເພື່ອໃຫ້ແທດເໝາະກັບສະພາບການຕົວຈິງໃນປັດຈຸບັນ. ກົດໝາຍສະບັບນີ້ ມີເນື້ອໃນກວມລວມຫຼາຍ, ເຮັດໃຫ້ບາງມາດຕາຍັງມີຄວາມສັບສົນໃນການນຳໃຊ້ ແລະ ຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ. ປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ໃຫ້ຮູ້ວ່າ: ຄະນະຮັບຜິດຊອບໄດ້ຈັດຕັ້ງການຄົ້ນຄວ້າ, ປະເມີນ, ທາບທາມ ແລະ ປະກອບຄຳເຫັນຕໍ່ຮ່າງກົດໝາຍສະບັບປັບປຸງໃໝ່ ເປັນຈຳນວນ 11 ຄັ້ງ ມາແລ້ວ.

ໃນເວລາກວດກາເນື້ອໃນຮອບດ້ານຂອງກົດໝາຍວ່າດ້ວຍທະນາຄານແຫ່ງລັດ, ທ່ານ ນາງ ຂັນແກ້ວ ຫຼ້າມະນີເງົາ ໄດ້ເນັ້ນໜັກວ່າ: ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປລາວ ສະບັບທຳອິດ ຖືກຮັບຮອງແລະປະກາດໃຊ້ໃນປີ 1990 ແລະ ໄດ້ຜ່ານການປັບປຸງ 3 ຄັ້ງຄື: ປີ 1995, 1999 ແລະ 2018. ຜ່ານການຈັດຕັ້ງປະຕິບັດເປັນໄລຍະເວລາ 6 ປີ ເຫັນວ່າ ກົດໝາຍສະບັບດັ່ງກ່າວຍັງຕ້ອງໄດ້ມີການປັບປຸງໃຫ້ຮັດກຸມ ແລະ ຈະແຈ້ງກວ່າເກົ່າ ໂດຍສະເພາະແມ່ນບັນດາມາດຕະການທີ່ເປັນຊ່ອງຫວ່າງໃນການຈັດຕັ້ງປະຕິບັດ ເພື່ອເຮັດໃຫ້ການເຄື່ອນໄຫວຂອງທະນາຄານ ມີປະສິດທິຜົນ, ແນໃສ່ເຮັດໃຫ້ການຄຸ້ມຄອງມະຫາພາກດ້ານການເງິນ, ສະຖາບັນການເງິນມີຄວາມໝັ້ນຄົງ ແລະ ລະບົບຊຳລະມີຄວາມເຂັ້ມແຂງ ແລະ ທັນສະໄໝ.

ບັນດາຜູ້ເຂົ້າຮ່ວມໄດ້ຄົ້ນຄວ້າປະກອບຄວາມເຫັນຕໍ່ເນື້ອໃນຂອງ 2 ຮ່າງກົດໝາຍ ທີ່ຕິດພັນກັບພາລະບົດບາດ, ສິດແລະໜ້າທີ່ຂອງຂະແໜງການຕົນ ແນໃສ່ເຮັດໃຫ້ເນື້ອໃນມີຄວາມສົມບູນຂຶ້ນຕື່ມ ເພື່ອຈະນຳໄປລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດໃນມໍ່ໆນີ້.

**(ນາງ ອາລິນ ສຸພົມມະປະດິດ)**



## ສະຫຼຸບ...

(ຕໍ່ຈາກໜ້າ 1)

ທານສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ), ບັນດາທ່ານປະທານ-ຮອງປະທານກຳມາທິການ, ຫົວໜ້າ ແລະ ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ, ຄະນະປະຈຳ ສປນວ ພ້ອມດ້ວຍຄະນະກົມ, ສູນ ແລະ ຫ້ອງການພາຍໃນ ສພຊ.

ກອງປະຊຸມໄດ້ຮັບຟັງບົດສະຫຼຸບຕີລາຄາກາງສະໄໝໃນການຈັດຕັ້ງປະຕິບັດແຜນພັດທະນາການຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ), ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ແລະ ພະນັກງານທີ່ເປັນເສນາທິການຂອງແຜນການ 5 ປີ (2021-2025) ແລະທິດທາງແຜນການທ້າຍສະໄໝຂອງສະພາແຫ່ງຊາດຊຸດທີ IX ແລະ ແຜນດຳເນີນງານການຍົກສູງຄວາມສາມາດທ້າຍສະໄໝ ເຊິ່ງຄະນະຮັບຜິດຊອບ, ຄະນະສະຖາບັນຄົ້ນຄວ້ານິຕິກຳ ແລະ ພາກສ່ວນທີ່ກ່ຽວຂ້ອງ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດແຜນກິດຈະກຳຕ່າງໆຕະຫຼອດໄລຍະ 3 ປີ (2021-2023) ໄດ້ລື່ນຄາດໝາຍຂອງແຜນການ 5 ປີ ເປັນຕົ້ນໄດ້ຈັດເຝິກອົບຮົມ-ສຳມະນາຍົກສູງຂີດຄວາມສາມາດໃຫ້ ສສຊ, ສສຂ ແລະ ພະນັກງານທີ່ເປັນເສນາທິການ 87 ຄັ້ງ ລື່ນແຜນການ 37 ຄັ້ງ, 98 ຫົວຂໍ້ ເຊິ່ງກຳນົດໄວ້ມີທັງໝົດ 120 ຫົວຂໍ້ ເທົ່າກັບ 81.66% ຂອງແຜນການ 5 ປີ. ພ້ອມນັ້ນ, ກໍໄດ້ວາງຄາດໝາຍແຜນການຮອດທ້າຍສະໄໝ ສພຊ ຊຸດທີ IX (2024-2025) ເປັນຕົ້ນການຈັດຕັ້ງຊຸດເຝິກອົບຮົມ, ສຳມະນາລະດັບຕ່າງໆ ໃຫ້ໄດ້ 30 ຄັ້ງ ຕາມຫົວຂໍ້ຕ່າງໆ 99 ຫົວຂໍ້; ສ້າງວິທະຍາກອນ, ຄູເຝິກໃຫ້ໄດ້ 100% ຂອງແຜນການ; ສ້າງປຶ້ມຫຼັກສູດ, ຄູ່ມືເຝິກອົບຮົມ-ສຳມະນາແລະສິ່ງພິມຂໍ້ມູນຕ່າງໆ ໃຫ້ໄດ້ 16 ຫົວຂໍ້. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ປະກອບຄຳເຫັນໃສ່ຮ່າງບົດສະຫຼຸບ ແລະ ທິດທາງແຜນການດັ່ງກ່າວ ເພື່ອໃຫ້ມີເນື້ອໃນຄົບຖ້ວນ, ສອດຄ່ອງກັບສະພາບການຈັດຕັ້ງປະຕິບັດຕົວຈິງຂອງວຽກງານ ໃຫ້ມີປະສິດທິຜົນດີຂຶ້ນກວ່າເກົ່າ.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແຜນການໃນຕໍ່ໜ້າ ແລະ ເປັນທິດໃນການຄົ້ນຄວ້າປັບປຸງວຽກງານຍົກສູງຂີດຄວາມສາມາດໃຫ້ໄດ້ຮັບຜົນດີ, ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ມີບາງຄຳເຫັນຄື: ເພີ່ມທະວີການປະສານສົມທົບລະຫວ່າງພາກສ່ວນຕ່າງໆພາຍໃນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ດ້ານເນື້ອໃນ, ຮູບການ ແລະ ງົບປະມານໃນການຈັດເຝິກອົບຮົມ-ສຳມະນາໃຫ້ມີຄວາມກົມກຽວ, ເອກະພາບ ແລະ ລວມສູນກວ່າເກົ່າ; ປັບປຸງມະຕິວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລວມການຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃຫ້ສອດຄ່ອງກັບການສັບຊ້ອນບັນດາທ່ານໃນຄະນະຊີ້ນຳລວມຕົວຈິງ; ຍູ້ແຮງການສ້າງ ແລະ ພັດທະນາດ້ານວິທະຍາກອນ, ຄູ່ມືການເຝິກອົບຮົມ-ສຳມະນາຂຶ້ນຕື່ມໃນທ້າຍສະໄໝຂອງສະພາແຫ່ງຊາດຊຸດທີ IX ທັງກະກຽມພື້ນຖານໃນການຍົກສູງຂີດຄວາມສາມາດສຳລັບສະພາແຫ່ງຊາດຊຸດທີ X ທີ່ຈະມາເຖິງນີ້; ເອົາໃຈໃສ່ປະເມີນ, ຕີລາຄາຜົນໄດ້ຮັບຈາກການນຳໃຊ້ບົດຮຽນທີ່ໄດ້ເຝິກອົບຮົມ-ສຳມະນາ ເພື່ອປັບປຸງບັນດາເນື້ອໃນໃຫ້ຖືກຕ້ອງ, ສອດຄ່ອງກັບເປົ້າໝາຍຕ່າງໆໃນແຕ່ລະໄລຍະ.

**(ນາງ ກຸກກິກ ບຸດດາໄຊ)**

## ທ່ານ ຄຳໃບ ດຳລັດ...

(ຕໍ່ຈາກໜ້າ 1)

(ສພຂ) - ວັນທີ 09 ກັນຍາຜ່ານມາທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ໄດ້ຈັດກອງປະຊຸມຕິດຕາມກວດກາການຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາແລະການພັດທະນາຊັບພະຍາກອນມະນຸດໃນໄລຍະຜ່ານມາ ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ (ສພຊ) ເຊິ່ງມີທ່ານຮອງເຈົ້າແຂວງ ຜູ້ຊີ້ນຳວຽກງານຂົງເຂດວັດທະນະທຳ-ສັງຄົມ, ຮອງປະທານສະພາປະຊາຊົນແຂວງ, ປະທານ-ຮອງປະທານທັງ 3 ຄະນະກຳມະການ ແລະ ຄະນະເລຂາທິການ ສພຂ, ຫົວໜ້າຫ້ອງວ່າການແຂວງ, ຫົວໜ້າຄະນະຈັດຕັ້ງ, ຫົວໜ້າຄະນະໂຄສະນາອົບຮົມ, ປະທານອົງການກວດກາລັດ, ປະທານແນວລາວສ້າງຊາດ, ປະທານສະຫະພັນນັກຮົບເກົ່າ, ຕາງໜ້າອົງການຈັດຕັ້ງມະຫາຊົນ ແລະ ບັນດາພະແນກການທີ່ກ່ຽວຂ້ອງຂອງແຂວງເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງກໍເພື່ອຜັນຂະຫຍາຍມະຕິຂອງສະພາແຫ່ງຊາດກ່ຽວກັບວຽກງານການສຶກສາໃນໄລຍະຜ່ານມາເພື່ອສຶກສາຄົ້ນຄວ້າ, ເກັບກຳຂໍ້ມູນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ, ຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ເພື່ອນຳເອົາຂໍ້ມູນໄປວິເຄາະ, ວິໄຈໃຫ້ເຫັນດ້ານດີ, ດ້ານອ່ອນ, ຜົນສຳເລັດ, ຂໍ້ຄົງຄ້າງ, ສາເຫດທີ່ເກີດຂຶ້ນ ແລະ ມີວິທີປັບປຸງແກ້ໄຂໃຫ້ໄດ້ຮັບຄຸນນະພາບຂອງການສຶກສາໃນໄລຍະໃໝ່ ເພື່ອລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX; ເພື່ອຄົ້ນຄວ້າສ້າງຮ່າງມະຕິວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາ, ການພັດທະນາຊັບພະຍາກອນມະນຸດ ແລະ ທິດທາງແຜນພັດທະນາຂະແໜງການສຶກສາແລະກິລາ ໃນໄລຍະໃໝ່.

ຫຼັງຈາກຮັບຟັງການລາຍງານໂດຍສັງເຂບຈາກຕາງໜ້າພະແນກການທີ່ກ່ຽວຂ້ອງ; ປະທານກອງປະຊຸມໄດ້ມີຄຳຖາມເຈາະຈີ້ມ ໂດຍສະເພາະການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ກິລາໃນໄລຍະຜ່ານມາ, ສະພາບການຮຽນ-ການສອນ, ການປະລະການຮຽນ, ການແກ້ໄຂບັນຫາການຂາດແຄນຄູ, ການສະໜອງງົບປະມານ ແລະ ອຸປະກອນການຮຽນ-ການສອນ, ການສະໜອງເບ້ຍລ້ຽງໃຫ້ແກ່ນັກຮຽນ ແລະ ສິ່ງອຳນວຍຄວາມສະດວກໃຫ້ແກ່ການສຶກສາ; ບັນດາຜູ້ເຂົ້າຮ່ວມກໍໄດ້ປະກອບຄຳເຫັນຢ່າງກົງໄປກົງມາບົນພື້ນຖານຄວາມເປັນຈິງທີ່ເກີດຂຶ້ນໃນສັງຄົມປັດຈຸບັນ. ໃນຕອນທ້າຍ, ປະທານກອງປະຊຸມໄດ້ມີຄຳເຫັນສະຫຼຸບ ແລະ ມີທິດຊີ້ນຳ ພ້ອມທັງສະເໜີໃຫ້ບັນດາພະແນກ ການທີ່ກ່ຽວຂ້ອງ ເອົາໃຈໃສ່ວິເຄາະວິໄຈບັນຫາທີ່ເກີດຂຶ້ນ, ໃຫ້ສາມາດຊອກຫາວິທີການ ແລະ ມາດຕະການປັບປຸງແກ້ໄຂເພື່ອເຮັດໃຫ້ລະບົບການສຶກສາໃນໄລຍະໃໝ່ມີປະສິດທິພາບ, ປະສິດທິຜົນຕາມຄາດໝາຍທີ່ວາງໄວ້.

ທ່ານຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ຍັງໄດ້ເຮັດວຽກຮ່ວມກັບອຳນາດການປົກຄອງເມືອງຊຸ ທຸມພອນ ເຊິ່ງໄດ້ຮັບຟັງການລາຍງານສະພາບລວມຂອງເມືອງຈາກທ່ານເຈົ້າເມືອງ ແລະ ບັນດາຫ້ອງການອ້ອມຂ້າງເມືອງ ພ້ອມທັງມອບອຸປະກອນການຮຽນ, ຊຸດນັກຮຽນຊາຍ-ຍິງ ແລະ ຊຸດກິລາໃຫ້ຫ້ອງການສຶກສາ ແລະ ກິລາເມືອງເພື່ອນຳໄປແຈກຢາຍ; ຫຼັງຈາກນັ້ນ ຍັງໄດ້ໄປຢ້ຽມຢາມ ແລະເຮັດວຽກກັບສະຖາບັນ ໄຊສົມບັດ ເຕັກໂນໂລຊີ ອີກດ້ວຍ.

ວັນທີ 11 ກັນຍາ ທີ່ຫ້ອງຮັບແຂກງາຊ້າງ ສະໂມສອນແຂວງສາລະວັນ, ທ່ານ ຄຳໃບ ດຳລັດ ແລະ ຄະນະ ໄດ້ພົບປະທ່ານ ປອ. ດາວວົງ ພອນແກ້ວ ເລຂາພັກແຂວງ, ເຈົ້າແຂວງໆສາລະວັນ ເຊິ່ງມີທ່ານ ຂັນໄຊ ລັດຖະເຮົ້າ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ຄະນະເລຂາທິການ ສພຂ ເຂົ້າຮ່ວມນຳ.

ທ່ານຮອງປະທານສະພາແຫ່ງຊາດ ໄດ້ແຈ້ງຈຸດປະສົງຂອງການເຄື່ອນໄຫວວຽກຢູ່ແຂວງສາລະວັນ ໂດຍປະຕິບັດຕາມແຜນການກະກຽມໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ແລະ ປະຕິບັດຕາມມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕິດຕາມກວດກາການຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດແຫ່ງຊາດໃນໄລຍະທີ່ຜ່ານມາ; ອີງໃສ່ສະພາບການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19 ເຮັດໃຫ້ການຮ່ຳຮຽນບໍ່ເປັນລະບົບ, ມີການປະລະການຮຽນໃນຊັ້ນປະຖົມເປັນຈຳນວນຫຼວງຫຼາຍໃນທົ່ວປະເທດ ເຊິ່ງຕ້ອງໄດ້ຮີບຮ້ອນເລັ່ງປັບປຸງແກ້ໄຂໂດຍໄວ. ສະນັ້ນ, ຈຶ່ງຕ້ອງໄດ້ເປີດກອງປະຊຸມຮ່ວມກັບບັນດາພະແນກການທີ່ກ່ຽວຂ້ອງຂອງແຂວງສາລະວັນ ເພື່ອຮັບຟັງການລາຍງານສະພາບຂໍ້ສະດວກ, ຂໍ້ຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດຍຸດທະສາດດັ່ງກ່າວໃນໄລຍະຜ່ານມາຂອງແຂວງ.

ທ່ານປອ. ດາວວົງພອນແກ້ວ ໄດ້ລາຍງານໃຫ້ຊາບໂດຍຫຍໍ້ກ່ຽວກັບສະພາບລວມການສຶກສາ, ສາເຫດການປະລະການຮຽນ ແລະ ຄຸນນະພາບການສຶກສາຂອງນັກຮຽນ ທີ່ເກີດຂຶ້ນພາຍໃນແຂວງໃນໄລຍະຜ່ານມາ.




## ມອບ-ຮັບເຄື່ອງ...

(ຕໍ່ຈາກໜ້າ 1)

ສ່ວນຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມ, ຕາງໜ້າມອບແມ່ນທ່ານນາງທັດດາວອນສີກະເສີມຄ່ຽມ ຮອງຫົວໜ້າພະແນກການດັ່ງກ່າວ ເຊິ່ງມີພາກສ່ວນກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

ຕອນເຊົ້າຂອງວັນທີ 14 ກັນຍາ, ທ່ານ ແກ້ວຈະເລີນ ເຊ່ຍຢີ້ງຢ່າງ ຮອງປະທານກຳມາທິການບັນດາເຜົ່າ ໄດ້ຮັບເງິນຊ່ວຍເຫຼືອຈາກບັນດານັກທຸລະກິດຟາມລ້ຽງໝູ ເພື່ອນຳໄປຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມຢູ່ບັນດາແຂວງພາກເໜືອ ແລະ ແຂວງລຽບແມ່ນ້ຳຂອງ ທີ່ໄດ້ຮັບຜົນກະທົບຈາກພາຍຸໄຕ້ຝຸ່ນຢາກິ ໂດຍການກ່າວມອບຂອງທ່ານ ສີ ລີ ຕາງໜ້າກຸ່ມກະສິກອນຟາມລ້ຽງໝູ; ໂອກາດດັ່ງກ່າວ, ທ່ານ ແກ້ວຈະເລີນ ເຊ່ຍຢີ້ງຢ່າງ ໄດ້ສະແດງຄວາມຂອບໃຈຢ່າງສູງ ແລະ ຍ້ອງຍໍຊົມເຊີຍທີ່ບັນດານັກທຸລະກິດຟາມລ້ຽງໝູ ໄດ້ນຳເງິນສົດມາມອບເພື່ອນຳໄປຊ່ວຍເຫຼືອບັນດາແຂວງທີ່ຖືກຜົນກະທົບຈາກໄພພິບັດຄັ້ງນີ້ ເຊິ່ງເປັນການປະກອບສ່ວນຊ່ວຍເຫຼືອພໍ່ແມ່ປະຊາຊົນຜູ້ທີ່ຖືກຜົນກະທົບ ແລະ ແຈ້ງໃຫ້ຮູ້ວ່າ ສະພາແຫ່ງຊາດ ໄດ້ແຕ່ງຕັ້ງຄະນະໃຫຍ່ ເພື່ອຈະເຄື່ອນລົງພື້ນທີ່ຊ່ວຍເຫຼືອພໍ່ແມ່ປະຊາຊົນຕາມຈຸດຕ່າງໆ ແລະ ຈະນຳເອົາເງິນຈຳນວນນີ້ ໄປຊ່ວຍເຫຼືອພໍ່ແມ່ປະຊາຊົນໃຫ້ໄວທີ່ສຸດ.

ເງິນສົດທີ່ນຳມາມອບໃນຄັ້ງນີ້ ໄດ້ຮັບການປະກອບສ່ວນຈາກກຸ່ມຊາວກະສິກອນຟາມລ້ຽງໝູ ກາເຣີ 30 ລ້ານກີບ, ສູນຄວາມງາມບຣູ9220ລ້ານກີບ, ກຸ່ມລ້ຽງໝູຟາມ ຕົວ ລີ ແລະ N&T ນູ ວີ ພາກສ່ວນລະ 10 ລ້ານກີບ ລວມທັງໝົດ 70 ລ້ານກີບ.

**(ນາງ ກຸກກິກ ບຸດດາໄຊ ແລະ ສອນສັກ ວັນວິໄຊ)**

## ສຳເລັດ...

(ຕໍ່ຈາກໜ້າ 4)

ງານສາທາລະນະສຸກ, ການສົ່ງເສີມພະນັກງານແພດທີ່ມີປະສິດທິພາບໃນການສົມທົບການປິ່ນປົວແບບພື້ນເມືອງກັບການແພດທີ່ທັນສະໄໝ ລວມທັງເຕັກໂນໂລຊີ, ແບບຢ່າງການເງິນສາທາລະນະສຸກ ແລະ ການເປັນຫຸ້ນສ່ວນ; ສ້າງຄວາມສາມັກຄີຄວາມຜູກພັນລະຫວ່າງສະມາຊິກລັດຖະສະພາພາກພື້ນ ແລະ ສ້າງຄວາມເປັນຫຸ້ນສ່ວນໃນລະດັບໂລກ, ພາກພື້ນ, ລະດັບຊາດ ແລະ ທ້ອງຖິ່ນ ເພື່ອສົ່ງເສີມຄວາມເຂັ້ມແຂງຂອງກອງປະຊຸມໂດຍທົ່ວໄປ, ຄວາມສາມາດໃນການມີສ່ວນຮ່ວມ ແລະ ມີອິດທິພົນຕໍ່ສະມາຊິກລັດຖະສະພາໃນລະດັບຄວາມສຳຄັນຂອງລະບົບສາທາລະນະສຸກ ແລະ ຂະແໜງການອື່ນ.

ໃນກອງປະຊຸມ, ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ມີໂອກາດປຶກສາຫາລືບົດຮຽນ ແລະ ປະສົບການກ່ຽວກັບວິທີເພີ່ມບົດບາດຂອງຕົນໃນການໃຫ້ຄຳໝັ້ນສັນຍາທາງການເມືອງ ແລະ ການຈັດຕັ້ງປະຕິບັດໃນຂົງເຂດສາທາລະນະສຸກ; ໃນຖານະເປັນເຈົ້າພາບຂອງກອງປະຊຸມ, ວານູອາຕູ ຍັງມີຈຸດປະສົງທີ່ຈະສະແດງຄວາມພະຍາຍາມໃນການແກ້ໄຂບັນຫາພະນັກງານ ແລະ ວິໄສທັດໃນອະນາຄົດ ເຊິ່ງປະກອບດ້ວຍ 5 ພາກ ດັ່ງນີ້:

ພາກທີ 1: ການສ້າງບຸຄະລາກອນດ້ານສາທາລະນະສຸກຢູ່ພາກພື້ນອາຊີ-ປາຊີຟິກຕາເວັນຕົກໃນອະນາຄົດ ເຊິ່ງໄດ້ກ່າວເຖິງບຸກຄະລາກອນດ້ານສາທາລະນະສຸກທີ່ມີປະສິດທິພາບຄືເປັນໃຈກາງຂອງລະບົບສາທາລະນະສຸກເປັນສິ່ງສຳຄັນສຳລັບການຈັດການດູແລສຸຂະພາບຢ່າງເປັນລະບົບຕໍ່ເນື່ອງ, ສາມາດຮັບມືກັບສິ່ງທ້າທາຍທີ່ອົງການອະນາໄມໂລກໃນພາກພື້ນກຳລັງປະເຊີນຢູ່ ລວມເຖິງພະຍາດບໍ່ຕິດຕໍ່, ບັນຫາຜູ້ອາຍຸສູງ, ປະຊາກອນທີ່ບໍ່ສາມາດເຂົ້າເຖິງການບໍລິການສຸກເສີນ ແລະ ເຫດການທີ່ເກີດຂຶ້ນໃໝ່, ການປ່ຽນແປງສະພາບດິນຟ້າອາກາດ, ການແຜ່ລະບາດຂອງໂຄວິດ-19 ຊີ້ໃຫ້ເຫັນຊ່ອງວ່າງຂອງລະບົບສຸຂະພາບຂອງພາກພື້ນ ໂດຍສະເພາະການຂາດແຄນບຸກຄະລາກອນສາທາລະນະສຸກ ທີ່ຍັງບໍ່ສາມາດຕອບສະໜອງໄດ້ກັບຄວາມຕ້ອງການ; ໃນພາກນີ້, ທ່ານຣສຈ.Martin Fletcher ຈາກອົງການອະນາໄມໂລກ ໄດ້ຂຶ້ນນຳສະເໜີຮູບແບບການໃຫ້ບໍລິການດ້ານສຸຂະພາບໃນຊຸມຊົນເຂດຫ່າງໄກສອກຫຼີກຂອງປະເທດອົດສະຕຣາລີ, ທ່ານ ດຣ. Lucas de Toca ຈາກອົງການອະນາໄມໂລກຂຶ້ນລາຍງານຕໍ່ກັບຫົວຂໍ້: ການຮັກສາສຸຂະພາບແບບພື້ນເມືອງຂອງປະຊາຊົນທີ່ຢູ່ຫ່າງໄກສອກຫຼີກຂອງປະເທດອົດສະຕຣາລີ, ທ່ານນາງ Yi Ling Chow ຈາກວິທະຍາໄລເຕັກນິກຂອງປະເທດ ສ.ເກົາຫຼີ ຂຶ້ນນຳສະເໜີວ່າດ້ວຍການນຳໃຊ້ລະ ບົບດິຈິຕອນເພື່ອການຕິດຕາມການຮັກສາສຸຂະພາບຂອງປະຊາຊົນໃນຊົນນະບົດ ແລະ ທ່ານ ດຣ. Zhao Hailei ຈາກອົງການອະນາໄມໂລກຂອງປະເທດຈີນ ຂຶ້ນລາຍງານກ່ຽວກັບການປິ່ນປົວໂດຍການປະສົມປະສານລະຫວ່າງການແພດພື້ນເມືອງ ແລະ ແພດສະໄໝໃໝ່.

ພາກທີ 2: ບຸກຄະລາກອນທີ່ມີປະສົບການສາທາລະນະສຸກ ແລະ ປະເດັນທີ່ເປັນບັນຫາ ໃນພາກນີ້ ໄດ້ນຳເອົາປະສົບການລະດັບພາກພື້ນຂອງຄວາມທ້າທາຍດ້ານບຸກຄະລາກອນສາທາລະນະສຸກໃນປັດຈຸບັນ ແລະ ສິ່ງທີ່ອາດຈະເກີດຂຶ້ນໃນອະນາຄົດ ນັບແຕ່ການສັບຊ້ອນບຸກຄະລາກອນ ໄປຈົນເຖິງຄວາມປອດໄພ ແລະ ຄວາມຫຼາກຫຼາຍຈາກການວິເຄາະພື້ນຖານບາງປະການ ຊີ້ໃຫ້ເຫັນວ່າ ການໃຫ້ການບໍລິການຢູ່ສະຖານທີ່ບໍລິການສຸຂະພາບ ລວມທັງຜູ້ຊ່ຽວຊານທີ່ເປັນສູນກາງນັ້ນ ຍັງມີຄວາມສາມາດບໍ່ທັນຕອບສະໜອງໄດ້ກັບຄວາມຕ້ອງການ ລວມໄປເຖິງຍຸດທະສາດການພັດທະນາຊັບພະຍາກອນມະນຸດເພື່ອຮັກສາ, ການປິ່ນປົວສຸຂະພາບ; ການດຳເນີນການຂອງພາກເອກະຊົນຍັງບໍ່ມີການຄວບຄຸມແລະ ມີນະໂຍບາຍທີ່ພຽງພໍເໝາະສົມສຳລັບການກະຈາຍທີ່ເທົ່າທຽມກັນໃນການໃຫ້ການບໍລິການ.

ພາກທີ 3: ການພັດທະນາ ແລະ ການວາງແຜນສຳລັບອະນາຄົດໄດ້ນຳສະເໜີການກວດກາການດຳເນີນການຮູບແບບນະວັດຕະກຳ ແລະ ຍຸດທະສາດທີ່ອອກແບບມາເພື່ອຫຼຸດຜ່ອນກຳລັງບຸຄະລາກອນ ກຽມພ້ອມສຳລັບອະນາຄົດ ເຊິ່ງລວມເຖິງການດູແລການສ້າງບຸຄະລາກອນສາທາລະນະສຸກ, ສ້າງຄວາມໝັ້ນໃຈ ແລະ ການສະໜັບສະໜູນການແພດພື້ນເມືອງ ແລະແນະນຳການບໍລິການສຸຂະພາບດິຈິຕອນເພື່ອໃຫ້ບຸກຄະລາກອນສາທາລະນະສຸກມີການປະຕິບັດໃໝ່, ການບໍລິການນຳສົ່ງ, ການເຂົ້າເຖິງການບໍລິການສາທາລະນະສຸກເຂດຫ່າງໄກສອກຫຼີກ; ໃນພາກນີ້ ໄດ້ເປີດເວລາສົນທະນາປະສົບການຂອງແຕ່ລະປະເທດ ເຊິ່ງທ່ານ ດຣ. ບຸນລ້ອມ ແກ້ວບົວໂຮມ ໄດ້ມີການສະເໜີແລກປ່ຽນກ່ຽວກັບ 2 ຫົວຂໍ້: 1. ບັນຫາສິ່ງທ້າທາຍຢ່າງຕໍ່ເນື່ອງແລະ ບັນຫາທີ່ພົ້ນເດັ່ນໃນລະບົບຊັບພະຍາກອນມະນຸດຂອງສາທາລະນະສຸກພາຍໃນປະເທດລາວແລະ 2. ການປະດິດສ້າງ ແລະ ການວາງແຜນໃນອະນາຄົດລະບົບສາທາລະນະສຸກຂອງປະເທດລາວ.

ພາກທີ 4: ເສດຖະສາດການເມືອງແລະການນຳໃຊ້ໜ້າທີ່ພິເສດຂອງສະມາຊິກລັດຖະສະພາ ໃນພາກນີ້ຄົ້ນຄວ້າ ເພື່ອລົງເລິກແນວຄວາມຄິດດ້ານເສດຖະສາດການເມືອງ, ລົງເລິກປະສົບການຂອງອຳນາດນິຕິບັນຍັດ, ການບໍລິຫານພາກລັດມີການປະສານງານກັນແນວໃດ ເພື່ອຮັກສາສະພາບທີ່ເປັນໃນນາມສະມາຊິກລັດຖະສະພາຈະປະຕິບັດພັນທະໜ້າທີ່ ແລະ ສ້າງປະສິບການຂອງຕົນໃນການກຳກັບດູແລການພັດທະນາຊັບພະຍາກອນມະນຸດດ້ານສຸຂະພາບຄືແນວໃດ ແລະ ໄດ້ມີການແລກປ່ຽນສົນທະນາ, ມີຫຼາກຫຼາຍແນວຄວາມຄິດຂອງບັນດາສະມາຊິກຂອງແຕ່ລະປະເທດນຳສະເໜີບົດຮຽນ, ປະສົບການກ່ຽວກັບຜົນໄດ້ຮັບ, ສິ່ງທ້າທາຍທີ່ໄດ້ເຮັດຜ່ານມາ ແລະ ການຮຽນຮູ້ຈາກປະສົບການຈາກພາກສ່ວນອື່ນ.

ພາກທີ 5: ຄະນະກຳມະການລັດຖະສະພາວ່າດ້ວຍການຮັກສາ ແລະ ສັບຊ້ອນບຸກຄະລາກອນສາທາລະນະສຸກ ເຂດຫ່າງໄກສອກຫຼີກ ເປັນການລົງຢ້ຽມຢາມຖອດຖອນບົດຮຽນໃນພາກສະໜາມຕົວຈິງ, ໄດ້ໄປຢ້ຽມຢາມສະຖານທີ່ບໍລິການສາທາລະນະສຸກໃນຊຸມຊົນ ເປັນຕົ້ນສຸກສາລາ, ການໃຫ້ການບໍລິການເຄື່ອນທີ່ໃນແຂວງເຊຟາ (Shefa) ເປັນເວລາ 1 ວັນ; ການລົງຢ້ຽມຢາມຄັ້ງນີ້ ສະແດງໃຫ້ເຫັນເຖິງຄວາມພະຍາຍາມຂອງປະເທດວານູອາຕູ ເພື່ອສ້າງຄວາມເຂັ້ມແຂງໃນການໃຫ້ບໍລິການສຸຂະພາບຂອງລະບົບສາທາລະນະສຸກຂັ້ນພື້ນຖານ ແລະ ສົ່ງເສີມການເຂົ້າເຖິງການດູແລສຸຂະພາບ, ການຄຸ້ມຄອງແລະການສະໜອງວຽກງານທາງການແພດໃຫ້ແກ່ປະຊາຊົນໃນເຂດຫ່າງໄກສອກຫຼີກ. ຜູ້ແທນກອງປະຊຸມໄດ້ມີໂອກາດໄປຢ້ຽມຢາມ 3 ຈຸດ ເຊັ່ນ: 1) ສຸກສາລາຂອງເມືອງ Saupia ຕັ້ງຢູ່ບ້ານ Paunagisu ພາກເໜືອຂອງປະເທດ; 2) ເຮືອ HELPR-1 ສ້າງເປັນເຮືອໃຫ້ການບໍລິການສາທາລະນະສຸກຂັ້ນເພື່ອຖານ ເປັນຕົ້ນການໂຄສະນາສຸຂະສຶກສາ, ການໃຫ້ວັກຊີນ, ການແນະນຳອື່ນ ເຊິ່ງເຄື່ອນທີ່ໄປໃຫ້ບໍລິການບັນດາໝູ່ເກາະຕ່າງໆໃນກໍລະນີປົກກະຕິ, ເຫດການສຸກເສີນ; 3) ສຸກສາລາຂອງເກາະເລເລປາ (Lelepa Island Dispensary) ທາງທິດຕາເວັນຕົກສ່ຽງເໜືອຂອງປະເທດ.

ກອງປະຊຸມເວທີປຶກສາຫາລືສະມາຊິກລັດຖະສະພາອາຊີ-ປາຊີຟິກ ກ່ຽວກັບສຸຂະພາບໂລກ ຄັ້ງທີ 8 ໄດ້ຕົກລົງເປັນເອກະພາບອອກຖະແຫຼງການ 12 ຂໍ້ ເພື່ອຮຽກຮ້ອງໃຫ້ລັດຖະສະພາແຕ່ລະປະເທດ ຈົ່ງປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນປະເດັນຕ່າງໆດັ່ງນີ້:

1) ເຫັນດີຮັບເອົາການພົບປະຫາລືຂອງສະມາຊິກລັດຖະສະພາ ການມີສ່ວນຮ່ວມໃນນາມບຸກຄົນ ແລະ ສ່ວນລວມໃນການເສີມສ້າງກຳລັງແຮງງານດ້ານສຸຂະພາບ ແລະ ສົ່ງເສີມການມີວຽກເຮັດງານທຳຂອງບຸກຄະລາກອນສາທາ ໃຫ້ມີຄຸນນະພາບສູງຂຶ້ນຈາກການນຳສະເໜີຂອງປະເທດເຈົ້າພາບ;

2) ໃຫ້ບັນດາສະມາຊິກລັດຖະສະພາແຕ່ລະປະເທດ ຮັບຮູ້ໃນການປຶກສາຫາລືແລະເສີມສ້າງການເປັນໜຶ່ງດຽວຂອງລັດຖະສະພາອາຊີ-ປາຊີຟິກ;

3) ສົ່ງເສີມນະວັດຕະກຳໃໝ່, ແນວຄວາມຄິດທີ່ເປັນປະໂຫຍດ ແລະ ໃຫ້ເຫັນຄວາມສຳຄັນຂອງນະໂຍບາຍແຜນງານ-ແຜນການ ໂດຍຫຼັກການທາງດ້ານວິທະຍາສາດສຳລັບລະບົບສຸຂະພາບ;

4) ການທຳຄວາມເຂົ້າໃຈວ່າດ້ວຍການບໍລິການທາງດ້ານສຸຂະພາບຂອງແຕ່ລະປະເທດລ້ວນແຕ່ໄດ້ຮັບການທ້າທາຍຂອງບຸກຄະລາກອນທາງການແພດ ເຖິງແມ່ນວ່າປະສົບການຂອງແຕ່ລະປະເທດທີ່ເໝືອນກັນກໍຕາມ;

5) ເອົາໃຈໃສ່ຕໍ່ຄວາມສຳຄັນຂອງບຸກຄະລາກອນດ້ານສາທາລະນະສຸກ ໃນຖານະທີ່ເປັນອົງປະກອບສຳຄັນຂອງລະບົບຮັກສາສຸຂະພາບ;

6) ເອົາໃຈໃສ່ໃຫ້ຄວາມສຳຄັນຕໍ່ການປະກັນສຸຂະພາບໃນທົ່ວໜ້າ ແລະ ຄວາມໝັ້ນຄົງດ້ານສຸຂະພາບເພື່ອໃຫ້ບັນລຸເປົ້າໝາຍຂອງອົງການອະນາໄມໂລກ;

7) ເອົາໃຈໃສ່ຕໍ່ຊຸມຊົນທີ່ມີຄວາມສ່ຽງ ແລະ ກຸ່ມເປົ້າໝາຍທີ່ເປາະບາງ ທີ່ໄດ້ຮັບຜົນກະທົບຈາກໄພທຳມະຊາດ, ຜູ້ທີ່ທຸກຍາກ, ແມ່ຍິງ, ເດັກນ້ອຍ, ຄົນພິການ ແລະ ຜູ້ອາຍຸສູງ ຕະຫຼອດເຖິງຜູ້ອົບພະຍົບ;

8.) ໃຫ້ຄວາມສຳຄັນຕໍ່ລະບົບສຸຂະພາບທີ່ຊັບຊ້ອນ ແລະ ການອ່ອນແອທາງດ້ານສຸຂະພາບຂອງປະຊາຊົນ;

9) ໃຫ້ຄວາມສຳຄັນຕໍ່ກັບການສ້າງບຸກຄະລາກອນດ້ານວຽກງານສາທາ ຖືວ່າເປັນການລົງທຶນໃສ່ການພັດທະນາປະເທດຊາດ;

10) ເນັ້ນຢ້ຳເຖິງຄວາມຈຳເປັນໃນການເປັນຫຸ້ນສ່ວນພາຍໃນພາກພື້ນ ແລະ ສາກົນຕະຫຼອດເຖິງພາຍໃນປະເທດ ແລະທ້ອງຖິ່ນເພື່ອສ້າງຂີດຄວາມສາມາດຂອງພາກລັດແລະພາກເອກະຊົນ;

11) ສະແດງຄວາມຂອບໃຈລັດຖະບານວານູອາຕູ ໂດຍສະເພາະກະຊວງສາທາລະນະສຸກທີ່ໄດ້ເປັນເຈົ້າພາບຈັດກອງປະຊຸມ ຄັ້ງທີ 8 ເຊິ່ງໄດ້ສະແດງໃຫ້ເຫັນເຖິງຄວາມເປັນຜູ້ນຳລະດັບຊາດແລະລະດັບພູມມິພາກ ໃນວຽກງານບຸກຄະລາກອນດ້ານສຸຂະພາບ ທີ່ໄດ້ຈັດຄວາມສຳຄັນຂອງລະບົບສຸຂະພາບທີ່ກ້າວໜ້າ;

12) ຮັບຮູ້ເຖິງຄວາມເປັນຜູ້ນຳທາງດ້ານເຕັກນິກຂອງອົງການຮັກສາສຸຂະພາບທີ່ໄດ້ເຮັດໜ້າທີ່ໆດີໃນລະດັບພາກພື້ນ.

ການເຂົ້າຮ່ວມກອງປະຊຸມຂອງຄະນະຜູ້ແທນສະພາແຫ່ງຊາດຄັ້ງນີ້ ຍັງໄດ້ຮຽນຮູ້, ແລກປ່ຽນ ແລະ ຖອດຖອນບົດຮຽນກ່ຽວກັບວຽກງານການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ການກຽມຄວາມພ້ອມ ແລະ ຄວາມໝັ້ນຄົງຂອງລະບົບສາທາລະນະສຸກໃນອະນາຄົດ ເພື່ອຮັບມືກັບການແຜ່ລະບາດຂອງພະຍາດຕ່າງໆໃນອະນາຄົດ ລວມທັງວຽກງານປະກັນສຸຂະພາບແຫ່ງຊາດ ແນໃສ່ຮັບປະກັນໃຫ້ປະຊາຊົນສາມາດເຂົ້າເຖິງການຮັກສາສຸຂະພາບໄດ້ຢ່າງທົ່ວເຖິງ ແລະ ໄດ້ສ້າງສາຍສຳພັນ, ຄວາມສາມັກຄີ, ມິດຕະພາບອັນດີກັບບັນດາສະມາຊິກລັດຖະສະພາຈາກປະເທດຕ່າງໆ; ພ້ອມກັນນີ້, ຍັງເຮັດໃຫ້ຖານະບົດບາດຂອງສະພາແຫ່ງຊາດ ແຫ່ງ ສປປ ລາວ ຖືກຍົກສູງພົ້ນເດັ່ນຂຶ້ນໃນພາກພື້ນອາຊີ-ປາຊີຟິກ ເນື່ອງຈາກຄະນະຜູ້ແທນລາວໄດ້ມີການປະກອບຄຳຄິດເຫັນ, ສົນທະນາແລກປ່ຽນໃນກອງປະຊຸມຢ່າງຫ້າວຫັນ. ສັງລວມແລ້ວ, ການເຂົ້າຮ່ວມກອງປະຊຸມສຸຂະພາບໂລກໃນຄັ້ງນີ້ ໄດ້ບັນລຸຕາມຈຸດປະສົງແລະລະດັບຄາດໝາຍ ອັນເປັນການປະກອບສ່ວນຢ່າງຕັ້ງໜ້າຂອງສະພາແຫ່ງຊາດລາວ ໃນການສົ່ງເສີມການຮ່ວມມືກັບບັນດາປະເທດທີ່ເປັນພາຄີຂອງອົງການອະນາໄມໂລກໃນພາກພື້ນອາຊີ-ປາຊີຟິກຕາເວັນຕົກ ກ່ຽວກັບບັນຫາສາທາລະນະສຸກ ທັງແລກປ່ຽນບົດຮຽນປະສົບການຂອງແຕ່ລະປະເທດໄດ້ເປັນຢ່າງດີ.

**(ກຳມາທິການວັດທະນະທຳ-ສັງຄົມ)**



## ຕິດຕາມ...

(ຕໍ່ຈາກໜ້າ 1)

(ສພຂ)-ວັນທີ 12 ກັນຍາຜ່ານມາ ທີ່ຫ້ອງປະຊຸມຫ້ອງວ່າການແຂວງໄຊຍະບູລີ ໄດ້ມີກອງປະຊຸມຕິດຕາມກວດກາການໂຄສະນາເຜີຍແຜ່, ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຢູ່ແຂວງໄຊຍະບູລີ ໂດຍການເປັນ ປະທານຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຣີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ; ມີທ່ານ ດວງຕາ ໄຊວຸດ ຮອງເລຂາພັກແຂວງ, ບັນດາທ່ານຮອງປະທານສະພາປະຊາຊົນແຂວງ (ສພຂ), ກຳມະການພັກແຂວງ, ປະທານ-ຮອງປະທານຄະນະກຳມະການ ແລະ ຄະນະເລຂາທິການ ສພຂ, ຫົວໜ້າ ແລະ ຮອງຫົວໜ້າພະແນກການ-ອົງການອ້ອມຂ້າງແຂວງ ພ້ອມດ້ວຍພະນັກງານຫຼັກແຫຼ່ງຂອງແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ສຈ. ປອ. ຈະເລີນ ເຍຍປາວເຣີ ມີຄຳເຫັນວ່າ: ການໂຄສະນາເຜີຍແຜ່ລັດຖະທຳມະນູນ ແລະ ກົດໝາຍ ແມ່ນວຽກງານໜຶ່ງທີ່ສຳຄັນໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍເຊິ່ງນັບແຕ່ສະຖາປະນາ ສປປລາວ ເປັນຕົ້ນມາ ລັດເຮົາໄດ້ປະກາດໃຊ້ລັດຖະທຳມະນູນ ແລະ ຜັນຂະຫຍາຍອອກເປັນກົດໝາຍຈຳນວນ 169 ສະບັບແລະນິຕິກຳໃຕ້ກົດໝາຍຈຳນວນຫຼວງຫຼາຍ; ແຕ່ເຫັນວ່າວຽກງານການໂຄສະນາເຜີຍແຜ່ລັດຖະທຳມະນູນ ແລະ ກົດໝາຍຂອງບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ຍັງບໍ່ໄດ້ຮັບການຈັດຕັ້ງປະຕິບັດຢ່າງແຂງແຮງ, ກວ້າງຂວາງ, ທົ່ວເຖິງທຸກເປົ້າໝາຍ ແລະ ເລິກເຊິ່ງ, ປາກົດການຫຍໍ້ທໍ້ລະເມີດກົດໝາຍ ມີລັກສະນະແຜ່ຫຼາຍໃນສັງຄົມ ແລະ ອີກປະການໜຶ່ງ ລັດ ເຮົາຍັງບໍ່ທັນໄດ້ສະຫຼຸບຕີລາຄາທົ່ວປະເທດຕໍ່ວຽກງານດັ່ງກ່າວ. ສະນັ້ນ, ຄະນະປະຈຳສະພາແຫ່ງຊາດ ຈຶ່ງໄດ້ອອກຄຳ ແນະນຳສະບັບເລກທີ 01/ຄປຈ, ລົງວັນທີ 03 ມັງກອນ 2024 ວ່າດ້ວຍການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ ກົດໝາຍ ເພື່ອໃຫ້ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ເອົາໃຈໃສ່ຕໍ່ວຽກງານການໂຄສະນາເຜີຍ ແຜ່ລັດຖະທຳມະນູນ ແລະ ກົດໝາຍໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເພື່ອເຮັດໃຫ້ປະຊາຊົນລາວບັນດາເຜົ່າ ມີຄວາມຮັບຮູ້, ເຂົ້າໃຈ ແລະ ສາມາດເຂົ້າເຖິງກົດໝາຍຫຼາຍຂຶ້ນ.

ໃນກອງປະຊຸມໄດ້ຮັບຟັງການລາຍງານຈາກຂະແໜງການ ແລະ ອົງການທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານໂຄສະນາ, ເຜີຍແຜ່ລັດຖະທຳມະນູນ ແລະ ກົດໝາຍ ຢູ່ແຂວງໄຊຍະບູລີ ໃນໄລຍະຜ່ານມາ ພ້ອມທັງປຶກສາຫາລື, ແລກປ່ຽນຄຳຄິດຄຳເຫັນຕໍ່ວຽກງານດັ່ງກ່າວເພື່ອໃຫ້ເຫັນເຖິງຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ດ້ານດີ, ດ້ານຄົງຄ້າງ, ສິ່ງທ້າທາຍ, ສາເຫດຕົ້ນຕໍທີ່ພາໃຫ້ມີດ້ານດີ, ດ້ານຄົງຄ້າງ, ບາງບົດຮຽນທີ່ຖອດຖອນໄດ້ ແລະ ທິດທາງແກ້ໄຂໃນຕໍ່ໜ້າ ແນໃສ່ສ້າງຄວາມເປັນເອກະພາບສູງໃນການຈັດຕັ້ງປະຕິບັດເຮັດໃຫ້ທົ່ວສັງຄົມມີສະຕິເຄົາລົບ, ປະຕິບັດລັດຖະທຳມະນູນແລະກົດໝາຍໃຫ້ສູງຂຶ້ນ, ການບັງຄັບໃຊ້ກົດໝາຍຂອງລັດເຮົາ ມີປະສິດທິພາບ ແລະ ປະສິດທິຜົນ.

**(ຂ່າວ: ນີ່ຕູ່ ປະສິດທິຜົງ, ພາບ: ອິນທີ ຊຽວສີຟ້າ)**



## ຫຼາຍພາກສ່ວນ...

(ຕໍ່ຈາກໜ້າ 1)

ເຄື່ອງອຸປະໂພກ ແລະ ບໍລິໂພກ, ແລະເງິນມາມອບໃຫ້ແກ່ສະພາແຫ່ງຊາດ ເພື່ອໄປມອບຕໍ່ໃຫ້ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໄພນໍ້າຖ້ວມຢູ່ແຂວງຫຼວງນໍ້າທາ ແລະ ນະຄອນຫຼວງວຽງຈັນ ປະກອບມີ: ກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ, ຄອບຄົວທ່ານ ສຈ. ປອ. ຈະເລີນ ເຍຍປາວເຣີ, ຄອບຄົວທ່ານ ພົຕ. ປອ. ວົງສັກ ພັນທະວົງ, ຄອບຄົວທ່ານ ສົນຍາ ປຣະເສີດ, ໂຮງຮຽນສົນໄຊ, ກຸ່ມບໍລິສັດ ພົງຊັບທະວີ, ບໍລິສັດ ບຸນອຸ້ມ ຮຸ່ງຈະເລີນ, ຄລີນິກແຂ້ວ Laone dental, ຄອບຄົວທ່ານ ນາງ ສີລິຄຸນ ພູນລາວັນ, ບໍລິສັດ ລາວ AEC ຈຳກັດ, ສະມາຄົມນັກທຸລະກິດຍິງ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ບໍລິສັດ ເຮືອງສີ ກໍ່ສ້າງ, ທະນາຄານພົງສະຫວັນ, ບໍລິສັດ ຄູນຄຳ ຈຳກັດ, ບໍລິສັດ ເອທີໂອໂຕ ມາຍນິງ ຈຳກັດ, ບໍລິສັດ ຈະເລີນເຊກອງ ພະລັງງານ ຈຳກັດ ແລະ ບໍລິສັດ ເບຍລາວ ຈຳກັດ ລວມມູນຄ່າເປັນເງິນທັງໝົດ 1,751,500,000 ກີບ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໄດ້ຕາງໜ້າສະພາແຫ່ງຊາດ ສະແດງຄວາມຂອບໃຈແລະຕີລາຄາສູງຕໍ່ພາກສ່ວນຕ່າງໆ ທີ່ນຳເອົາເຄື່ອງຊ່ວຍເຫຼືອຈຳນວນດັ່ງກ່າວມາມອບໃນຄັ້ງນີ້ ເຊິ່ງເປັນການປະກອບສ່ວນສຳຄັນເຂົ້າໃນວຽກງານແກ້ໄຂ ແລະ ຕ້ານໄພພິບັດຢູ່ ສປປ ລາວ; ພ້ອມທັງຢືນຢັນວ່າ ຈະນຳເອົາເຄື່ອງທີ່ໄດ້ຮັບໄປມອບໃຫ້ແກ່ປະຊາຊົນທີ່ໄດ້ຮັບຜົນກະທົບຢ່າງທົ່ວເຖິງ. ພ້ອມກັນນັ້ນ, ກໍໄດ້ມອບໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດ ແລະ ຂອງເລຂາທິການສະພາແຫ່ງຊາດ ໃຫ້ແກ່ພາກສ່ວນທີ່ມາອຸປະຖຳເພື່ອສັນລະເສີນຜົນງານ ແລະ ຄຸນງາມຄວາມດີໃນການປະກອບສ່ວນຄັ້ງນີ້.

ໃນວັນດຽວກັນ, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ພ້ອມດ້ວຍຄະນະ ໄດ້ໄປມອບເຄື່ອງຊ່ວຍເຫຼືອໃຫ້ແກ່ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໄພນໍ້າຖ້ວມຢູ່ບ້ານດ່ານຄຳ, ບ້ານດອນຊິງຊູ້ ເມືອງສີໂຄດຕະບອງ; ບ້ານທ່າແຂກ, ບ້ານຊາຍຟອງໃຕ້, ບ້ານສີຖານໃຕ້, ບ້ານຊາຍຟອງເໜືອ, ບ້ານໂຄກຊາຍ ແລະ ບ້ານຫ້ອມໃຕ້ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ.

**(ນາງ ກຸກກິກ ບຸດດາໄຊ)**

# ພິທີມອບ-ຮັບໂຄງການກໍ່ສ້າງໂຮງຮຽນປະຖົມ ບ້ານກ້ອກ ເຂດກຸ່ມບ້ານພັດທະນາຈຽງຕູບ



(ສພຂ) - ໃນວັນທີ 4 ກັນຍາ 2024 ທີ່ຜ່ານມານີ້, ທີ່ບ້ານກ້ອກເຂດກຸ່ມບ້ານພັດທະນາຈຽງຕູບເມືອງເຊໂປນແຂວງສະຫວັນນະເຂດ ໄດ້ຈັດພິທີມອບ-ຮັບ ໂຄງການກໍ່ສ້າງໂຮງຮຽນປະຖົມບ້ານກ້ອກ, ໂດຍການເປັນປະທານຂອງທ່ານ ກົງແກ້ວ ມີວໍລະຈັກ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງສະຫວັນນະເຂດ ເຂົ້າຮ່ວມພິທີມີບັນດາຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13, ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງເຊໂປນ, ມີທ່ານຮອງຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ, ຮອງເຈົ້າເມືອງເຊໂປນ ພ້ອມຄະນະ ແລະ ການນຳເມືອງ, ການນຳກຸ່ມບ້ານພັດທະນາຈຽງຕູບ, ບໍລິສັດຈະເລີນເຊໂປນ ກໍ່ສ້າງຂົວທາງ ເຄຫະສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ

ໃນພິທີ ຕາງໜ້າໃຫ້ບໍລິສັດ ຈະເລີນເຊໂປນ ກໍ່ສ້າງຂົວທາງ ເຄຫະສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ ໃນນາມຜູ້ຮັບເໝົາກໍ່ສ້າງ ກ່າວລາຍງານ ແລະ ກ່າວມອບໂຄງການໃຫ້ເຈົ້າຂອງໂຄງການ: ໂຄງການກໍ່ສ້າງໂຮງຮຽນ ບ້ານກ້ອກ ຢູ່ກຸ່ມບ້ານຈຽງຕູບ ເມືອງເຊໂປນ ໃນເບື້ອງຕົ້ນປະກອບມີ2ໜ້າວຽກ ຄື: ວຽກອາຄານຫ້ອງຮຽນ 3 ຫ້ອງ ແລະ 1 ຫ້ອງການຄູ ແລະ, ວຽກກໍ່ສ້າງຫ້ອງນໍ້າ 2 ຫ້ອງ; ໄດ້ເລີ່ມຈັດຕັ້ງປະຕິບັດໂຄງການມາແຕ່ທ້າຍເດືອນເມສາ2024 ເປັນຕົ້ນມາຈົນມາຮອດຕົ້ນເດືອນກໍລະກົດ 2024 ໄດ້ມີການກວດກາໂຄງການ ຄັ້ງທີ I ປະຕິບັດບັນດາໜ້າວຽກໄດ້ 80% ຄິດເປັນມູນຄ່າ640ລ້ານກີບ. ຕໍ່ມາໃນທ້າຍເດືອນ ສິງຫາ 2024 ໄດ້ມີການກວດກາໂຄງການ ຄັ້ງທີ II ປະຕິບັດບັນດາໜ້າວຽກໄດ້ 20% ຄິດເປັນມູນຄ່າ 160 ລ້ານກີບ. ສັງລວມແລ້ວ ມູນຄ່າການກວດກາວຽກໃນ 2 ຄັ້ງຜ່ານມາ ປະຕິບັດໄດ້ 100% ຄິດເປັນມູນຄ່າ 800 ລ້ານກີບ. ຕໍ່ມາ ທາງເຈົ້າຂອງໂຄງການ ໄດ້ສະເໜີໜ້າວຽກເຂົ້າເພີ່ມໃນໂຄງການດັ່ງກ່າວ ປະກອບມີ 2 ໜ້າວຽກ ຄື: ວຽກເບຕົງ (ເທເດີ່ນໂຮງຮຽນ) ແລະ ວຽກໄຟຟ້າ (ຕິດຕັ້ງໄຟຟ້າອາຄານຫ້ອງຮຽນ ແລະ ຫ້ອງການຄູ); ໄດ້ເລີ່ມຈັດຕັ້ງປະຕິບັດໜ້າວຽກໃນກາງເດືອນ ສິງຫາ 2024 ເປັນຕົ້ນມາ ຈົນມາຮອດທ້າຍເດືອນສິງຫາ 2024 ໄດ້ມີການກວດກາໂຄງການ ຄັ້ງທີ I ປະຕິບັດບັນດາໜ້າວຽກໄດ້100%ຄິດເປັນມູນຄ່າ 156 ລ້ານກີບ ລວມເປັນມູນຄ່າໂຄງການທັງໝົດ 956 ລ້ານກີບ.

ທ່ານ ພູທອນ ພຸດທະຂັນຕິ ເລຂາທິການສະພາປະຊາຊົນແຂວງ ຄະນະຮັບຜິດຊອບໂຄງການ ກໍໄດ້ຂຶ້ນກ່າວຮັບເອົາໂຄງການຈາກບໍລິສັດຮັບເໝົາກໍ່ສ້າງ ແລະ ກ່າວມອບຕໍ່ໃຫ້ການນຳເມືອງເຊໂປນ ເພື່ອເປັນຜູ້ຄຸ້ມຄອງ-ນຳໃຊ້ ແລະ ກໍໄດ້ມີການລົງນາມ ມອບ-ຮັບ ຢ່າງເປັນທາງການ ລະຫວ່າງ ທ່ານ ປານ ສະຫວັນ ເຜີດສີນໍລາດ ຜູ້ອຳນວຍການບໍລິສັດ ຈະເລີນເຊໂປນ ກໍ່ສ້າງຂົວທາງ ເຄຫະສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ ເປັນຜູ້ຮັບເໝົາກໍ່ສ້າງ ມອບໃຫ້ສະພາປະຊາຊົນແຂວງ ໃນນາມເຈົ້າຂອງໂຄງການ ລົງນາມໂດຍທ່ານ ກົງແກ້ວ ມີວໍລະຈັກ ປະທານສະພາປະຊາຊົນແຂວງ, ຫຼັງຈາກນັ້ນ ທ່ານປະທານສະພາປະຊາຊົນແຂວງ ກໍໄດ້ຮ່ວມລົງນາມມອບໂຄງການໃຫ້ທ່ານ ຄຳຟອງ ໄຊພິບຸດຮອງເຈົ້າເມືອງເຊໂປນ ໂດຍຊ່ອງໜ້າການເປັນສັກຂີພິຍານຈາກແຂກທີ່ເຂົ້າຮ່ວມ. ຜ່ານການຈັດຕັ້ງປະຕິບັດຂອງບໍລິສັດ ຈະເລີນເຊໂປນ ກໍ່ສ້າງຂົວທາງ ເຄຫາສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ (ຜູ້ຮັບເໝົາ) ແຕ່ວັນທີ 25 ເມສາ 2024 ຫາ ວັນທີ 25 ກັນຍາ 2024 ເຫັນວ່າຜູ້ຮັບເໝົາໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດບັນດາໜ້າວຽກຂອງໂຄງການຖືກຕ້ອງຕາມຂັ້ນຕອນ, ຖືກຕາມມາດຕະຖານເຕັກນິກ ແລະ ຮັບປະກັນຄຸນນະພາບ. ພ້ອມນັ້ນ, ການຈັດຕັ້ງປະຕິບັດໂຄງການ ແມ່ນສຳເລັດກ່ອນໄລຍະເວລາທີ່ໄດ້ກຳນົດໄວ້ໃນສັນຍາ; ສະນັ້ນ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ຊຸດທີ 9 ແລະ ສະພາປະຊາຊົນແຂວງສະຫວັນນະເຂດ ຊຸດທີ II ໃນນາມເຈົ້າຂອງໂຄງການ ຂໍມອບໂຄງການກໍ່ສ້າງໂຮງຮຽນ ຢູ່ກຸ່ມບ້ານຈຽງຕູບ ເມືອງເຊໂປນ ແຂວງສະຫວັນນະເຂດ ໃຫ້ອຳນາດການປົກຄອງເມືອງ ກໍຄືຫ້ອງການສຶກສາທິການ ແລະ ກິລາເມືອງເຊໂປນ ເປັນຜູ້ຄຸ້ມຄອງ-ນຳໃຊ້ຕາມຈຸດປະສົງ ເຊິ່ງໂຄງການດັ່ງກ່າວແມ່ນນຳໃຊ້ງົບປະມານຈາກການລະດົມ.

ໂອກາດນີ້ ທ່ານປະທານສະພາປະຊາຊົນແຂວງສະຫວັນນະເຂດ ກໍໄດ້ມອບເງິນ, ເສື້ອຂາວນັກຮຽນ, ອຸປະກອນການຮຽນປຶ້ມ, ສໍ ແລະ ອຸປະກອນກິລາ ໃຫ້ໂຮງຮຽນປະຖົມບ້ານກ້ອກ ພ້ອມທັງມີຄຳເຫັນໂອ້ລົມວ່າ: ການນຳແຂວງ ກໍຄືສະພາປະຊາຊົນແຂວງ ມີຄວາມເປັນຫ່ວງເປັນໄຍຕໍ່ການສຶກສາຂອງເດັກນ້ອຍໃນເຂດຫ່າງໄກສອກຫຼີກ ແລະ ບໍ່ຢາກໃຫ້ເດັກນ້ອຍປະລະການຮຽນ, ຈຶ່ງເອົາໃຈໃສ່ໃນການກໍ່ສ້າງໂຮງຮຽນ ເພື່ອໃຫ້ນັກຮຽນມີບ່ອນສຶກສາ, ດັ່ງນັ້ນໃຫ້ສຶກສາເມືອງກໍຄືປະທານກຸ່ມມາຕິດຕາມກວດກາການຮຽນການສອນຢ່າງເປັນປົກກະຕິ, ໃຫ້ອຳນາດການປົກຄອງບ້ານເອົາໃຈໃສ່ປົກປັກຮັກສາໂຮງຮຽນແຫ່ງນີ້ ນຳໃຊ້ໄດ້ຍາວນານ, ໃຫ້ຄູເອົາໃຈໃສ່ສິດສອນໃຫ້ໄດ້ຕາມ 5 ຫຼັກມູນຂອງການສຶກສາ, ເປັນແບບຢ່າງໃນການຂີດຂຽນພາສາລາວໃຫ້ຖືກຕ້ອງ, ສິດສອນໃຫ້ເດັກນ້ອຍຮູ້ຮ້ອງເພງຊາດລາວໃຫ້ຖືກຕ້ອງ, ການໃຊ້ພາສາປາກເວົ້າ ສອນພາສາລາວໃຫ້ເດັກນ້ອຍໃຫ້ຫຼາຍ ຖືກຕ້ອງ ຄູຕ້ອງເປັນແມ່ພິມທີ່ດີ, ຄູກໍຕ້ອງໄດ້ຮຽນໄດ້ພັດທະນາຕົນເອງ, ຮຽກຮ້ອງທັງໝົດຜູ້ປົກຄອງທັງໝົດ ຄູສອນ ຕ້ອງຕິດຕາມເບິ່ງວ່າເດັກນ້ອຍມາຮຽນປົກກະຕິບໍ ໃຫ້ລາຍງານໃຫ້ກຸ່ມໂດຍໄວ, ສຸມໃສ່ໃຫ້ເດັກນ້ອຍມາຮຽນປົກກະຕິ ເພື່ອຫຼີກລ່ຽງການປະລະການຮຽນ ແລະ ການກຶກໜັງສື.




# ທ້າວຄຳຄື....?

# ດົ້ນກົບເມກ

ເລື່ອງຂອງທ້າວ ຄຳຄື ນີ້ ອາດຈະມີຢູ່ຮ່ວມໜ້າທີ່ວຽກງານຫຼາຍບ່ອນທີ່ສັງຄົມຄົນອ້ອມຂ້າງເຂົ້າໃຈວ່າ: ທ້າວຄຳຄື ເປັນຄົນມີຄວາມຮູ້ ເຮັດວຽກເກັ່ງ ເຊິ່ງເບິ່ງຈາກການເວົ້າວ່າ ແລະ ການແຕ່ງໂຕຄືໄປໝົດທຸກຢ່າງ ສົມວ່າໄດ້ຊື່ທ້າວ ຄຳຄື ສັງເກດເບິ່ງກິລິຍາທ່າທາງ ເວົ້າຈາໜ້າເຊື່ອຖື ຫຼາຍຄົນເມື່ອພົບ ແລະ ພໍໄດ້ຟັງປຸບ ກໍຫຼົງເຂົ້າໃຈໂລດວ່າ ຜູ້ກ່ຽວເປັນຄົນດີມີສີມືເກັ່ງກ້າສາມາດ ເຊິ່ງເລື່ອງຂອງທ້າວຄຳຄືນີ້ ປາກົດຊ່ຳລືໃນວົງສົນທະນາຫຼາຍບ່ອນ.

ຜູ້ຂຽນໄດ້ຟັງພະນັກງານບຳນານຫຼາຍຄົນເລົ່າສູ່ຟັງວ່າ: ທ້າວ ຄຳຄື ກໍແມ່ນພະນັກງານຜູ້ໜຶ່ງຢູ່ໃນກົງຈັກການຈັດຕັ້ງຄັກແນ່ ທີ່ມີຈັງຫວະ ແລະ ໂອກາດຊີວິດກ້າວຂຶ້ນສູ່ຕຳແໜ່ງສູງໄດ້ຍ້ອນບົດບາດຄຳຄື ຈຶ່ງໄດ້ຊື່ວ່າ: ທ້າວຄຳຄື ເວລາເພິ່ນໄປເວົ້າຫຼາຍບ່ອນຄົນຟັງກໍຫຼົງເຊື່ອວ່າເພິ່ນໄດ້ມີຜົນງານເຮັດວຽກສຳເລັດຫຼາຍແນວ ເຊິ່ງເຫດຜົນຄົນຟັງທຳອິດຫຼົງເຊື່ອ ກໍຍ້ອນວ່າພາບພົດການແຕ່ງໂຕບວກກັບຖານະຕຳແໜ່ງກໍຍິ່ງຄືຄັກ, ລັກສະນະເດັ່ນຂອງທ້າວຄຳຄືເຂົາຈະມີວິທີ-ກົນໄກເວົ້າວາຈາເປັນຈັ່ງຫວະຄ່ອງຄື ບໍ່ເກີ້ເຂີນ ບໍ່ລະອາຍ-ສີໜ້າວາຈາຄ່ອງຄື ເວົ້າລວມມາດຜູ້ນຳໂດດເດັ່ນ ແລະສິລະປະການເວົ້າກໍເຮັດໄດ້ດີ, ທ້າວ ຄຳຄື ຫາກໄປປາກົດໂຕຢູ່ບ່ອນໃດ ກໍຈະໃຊ້ສິລະປະເວົ້າຈາຍົກເຫດຜົນເຂົ້າກະທໍຍໍໂຕເອງ ຈົນຜູ້ຟັງຮູ້ບໍ່ທັນຫູ່ຮູ້ມບໍ່ທັນ ກໍຫົງເຊື່ອວ່າແມ່ນແທ້-ເຊື່ອວ່າເພິ່ນເຮັດໄດ້ ເປັນຜົນງານເພິ່ນແທ້ ເຊິ່ງຄວາມຈິງແລ້ວບໍ່ແມ່ນແນວນັ້ນ ຜູ້ທີ່ເຮັດໄດ້ແທ້ພັດບໍ່ໄດ້ເວົ້າຄ່ອງຄື ແລະ ກໍບໍ່ຢາກເວົ້າອວດອົ່ງທະນົງຕົນ, ຜູ້ເຮັດວຽກໄດ້ແທ້ ເຂົາຈະເວົ້າອະທິບາຍ ຖ້າຫົວໜ້າໃຫ້ເຂົາເວົ້າ ບາງທີເຂົາກໍບໍ່ຢາກເວົ້າເລີຍ ປະໃຫ້ທ້າວ ຄຳຄື ທ່ຽວໄປເວົ້າແຕ່ລະບ່ອນວ່າເປັນຜົນງານຂອງຕົນ.

ເລື່ອງທ້າວຄຳຄື ເຂົ້າໃຈວ່າຜູ້ອ່ານຊິໄດ້ພົບເຫັນຄືກັນ ບາງບ່ອນຫົວໜ້າມັກເວົ້າຖືກອົກຖືກໃຈ ເພາະທ້າວ ຄຳຄື ເກັ່ງເລື່ອງຍ້ອງຍໍນາຍ ! ຢູ່ໜ່ວຍງານໃດ ? ສຳນັກງານອົງການໃດ ? ບໍ່ວ່າພາກລັດ ຫຼື ເອກະຊົນ ຫາກມີບຸກຄົນປະເພດນີ້ເຂົ້າສັງກັດແລ້ວ ໜ່ວຍງານນັ້ນສ່ຽງຕໍ່ການແຕກແຍກຄວາມສາມັກຄີ; ສ່ຽງຕໍ່ການຈັດຕັ້ງປະຕິບັດວຽກງານບໍ່ໄປບໍ່ມາ... ທ້າວຄຳຄືນີ້ເມື່ອຖືກຈັບໄດ້ໄລ່ທັນວ່າເປັນແຕ່ປາກ...ແຕ່ເວົ້າ ເຂົາກໍຈະທຳທ່າແບບປົກກະຕິບໍ່ຮ້ອນບໍ່ເດືອງຫຍັງ ? ບໍ່ມີກຽດສັກສີຫຍັງ ? ປະເພດກິນແມງວັນບໍ່ເບື່ອ... ມີການສັງເກດວ່າວຽກງານບໍ່ໄປບໍ່ມາ ການຈັດຕັ້ງປະຕິບັດບໍ່ປະສົບຜົນສຳເລັດ ແມ່ນຍ້ອນໃນໜ່ວຍງານນັ້ນມີທ້າວຄຳຄືສັງກັດຢູ່.

ຂໍຝາກເຖິງຝ່າຍບຸຄະລາກອນ ຝ່າຍຈັດຕັ້ງດູແລກ່ອນຈະເລື່ອນຊັ້ນຕຳແໜ່ງກ່ອນຈະມອບໜ້າທີ່ວຽກງານໃຫ້ຕ້ອງເບິ່ງໃຫ້ອອກວ່າ: ຄົນຜູ້ນັ້ນ ແມ່ນທ້າວ ຄຳຄື ບໍ່ ? ບໍ່ຊັ້ນອັນຕະລາຍເນີ...






# ຫວ່າງ – ວ່າງ

"ວ່າງນີ້, ຂ້ອຍບໍ່ມີເວລາຫວ່າງເລີຍ ຕ້ອງໄປບ້ານສະວ່າງຕະຫຼອດ." ນັກຂຽນມືໃໝ່ກົດປຸ່ມຕົວອັກສອນລົງໃສ່ໃນໜ້າເຟດຂອງຕົນ ເພື່ອໃຫ້ເພື່ອນນັກອ່ານໄດ້ອ່ານບົດເລື່ອງສັ້ນທີ່ຫາກໍປັ້ນແຕ່ງອອກມາ ແຕ່ບໍ່ສະເດືອກໃຈວ່າການສະກົດຄຳຂອງຕົນຖືກຕ້ອງຕາມຄວາມໝາຍຂອງແຕ່ລະສັບຫຼືບໍ່.

ປະໂຫຍກໃນວົງຢືມຂ້າງເທິງນີ້, ຖ້າເປັນພາສາທີ່ເປັ່ງສຽງອອກມາຈາກປາກກໍຈະບໍ່ມີບັນຫາຫຍັງ ຜູ້ຟັງສາມາດເຂົ້າໃຈໄດ້ຢ່າງແຈ່ມແຈ້ງດີ. ແຕ່ຖ້າຂຽນເປັນຕົວອັກສອນແລ້ວ ກໍຈະມີບັນຫາໃນເລື່ອງການສະກົດຄຳຜິດ ເພາະໃນການຂຽນຕົວອັກສອນສູງ ແລະ ອັກສອນຕ່ຳມີໄມ້ເອກ x່ ນີ້, ພວກເຮົາເຈົ້າຂ້ອຍສ່ວນຫຼາຍມັກຈະອອກສຽງຄືກັນ.

ຫວ່າງ ແລະ ວ່າງ, ຖ້າໃຫ້ທວາຍບອກຄວາມໝາຍໂດຍເວົ້າເປັນຄຳໂດດໆ ກໍມັກຈະທວາຍບໍ່ຖືກ. ແຕ່ຖ້າສອງຄຳນີ້ຢູ່ໃນປະໂຫຍກກໍຈະສາມາດບອກເຖິງຄວາມໝາຍໄດ້ຢ່າງຊັດເຈນ.

ຜ່ານມາ ປາກົດເຫັນມີຜູ້ສະກົດ "ວ່າງ" ເປັນ "ຫວ່າງ" ຫຼືປີ້ນກັນສະກົດ "ຫວ່າງ" ເປັນ "ວ່າງ". ເພື່ອໃຫ້ພວກເຮົາສະກົດຄຳທັງສອງນີ້ຖືກຕ້ອງຕາມຄວາມໝາຍຂອງມັນ, ຜູ້ຂຽນຂໍອະທິບາຍທັງສອງສັບຄືດັ່ງນີ້:

"ຫວ່າງ" ເປັນຄຳນາມ ມີຄວາມໝາຍວ່າ:

(1) ຍາມ, ເວລາ, ເທື່ອ ເຊັ່ນ

- ຂ້ອຍພົບລາວຢູ່ຫຼວງພະບາງຫວ່າງເດືອນກ່ອນ.
- ຫວ່າງນີ້, ອາຈານຄາວຽກຫຼາຍ.
- ພວກເຮົາຕ້ອງຫາເວລາໄປຢາມລາວຈັກຫວ່າງ.

(2) ບ່ອນເປົ່າຢູ່ກາງໄລຍະແຕ່ບ່ອນໜຶ່ງຫາບ່ອນໜຶ່ງ ເຊັ່ນ

- ເຕະບານລອດຫວ່າງຂາ.
- ເວລາຂຽນບົດ ກໍໃຫ້ມີບ່ອນຍະຫວ່າງແດ່ ! ບໍ່ແມ່ນຊິຂຽນຕິດກັນໄປໝົດ.

ນອກຈາກນັ້ນ ຍັງມີຄຳສອງພະຍາງທີ່ພະຍາງຫຼັງສະກົດເປັນ "ຫວ່າງ" ຄື 'ລະຫວ່າງ' ແລະ 'ສະຫວ່າງ'.

"ວ່າງ" ເປັນຄຳຄຸນນາມ ມີຄວາມໝາຍວ່າ:

(1) ບໍ່ມີຫຍັງ, ເປົ່າ (ບາງເທື່ອມັກໃຊ້ຕິດກັນວ່າ ເປົ່າວ່າງ ຫຼື ວ່າງເປົ່າ) ເຊັ່ນຕົວຢ່າງ:

- ໂຕະນີ້ບໍ່ວ່າງ ແຕ່ຫົວໃຈນ້ອງຍັງວ່າງ.
- ບັນຫານີ້ມີຊ່ອງວ່າງຫຼາຍ.
- ຫ້ອງເຊົ່ານີ້ຍັງວ່າງ.

(2) ບໍ່ມີພາລະຜູກພັນ ເຊັ່ນ

- ເວລາວ່າງວຽກ ຂ້ອຍມັກຂຽນກອນສົ່ງໃຫ້ຜູ້ສາວອ່ານ.
- ສ່ວນລາວບໍ່ເຄີຍວ່າງວຽກຈັກເທື່ອ, ມີແນວເຮັດຢູ່ຕະຫຼອດຈົນບໍ່ມີເວລາລົມຜູ້ສາວ.

ເພື່ອບໍ່ໃຫ້ຂຽນຜິດ ພຽງແຕ່ຈື່ງ່າຍໆວ່າ "ຫວ່າງ" ແມ່ນຄຳນາມທີ່ໝາຍເຖິງ "ຍາມ, ເວລາ" ແລະ "ບ່ອນເປົ່າຢູ່ກາງ". ສ່ວນ "ວ່າງ" ນັ້ນ ເປັນຄຳຄຸນນາມທີ່ໝາຍເຖິງ "ເປົ່າ, ບໍ່ມີຫຍັງ".

ດັ່ງນັ້ນ, ພວກເຮົາຄວນໃສ່ໃຈ:

- ຢ່າໄດ້ຂຽນ "ມີຫ້ອງວ່າງໃຫ້ເຊົ່າ" ເປັນ "ມີຫ້ອງຫວ່າງໃຫ້ເຊົ່າ".
- ຢ່າໄດ້ຂຽນ "ຫວ່າງນີ້, ຂ້ອຍຄາວຽກຫຼາຍ" ເປັນ "ວ່າງນີ້, ຂ້ອຍຄາວຽກຫຼາຍ".

ສ່ວນປະໂຫຍກຂ້າງຕົ້ນຂອງບົດນີ້ ກໍຕ້ອງຂຽນໃຫ້ຖືກຄືແນວນີ້: "ຫວ່າງນີ້, ຂ້ອຍບໍ່ມີເວລາວ່າງເລີຍ ຕ້ອງໄປບ້ານສະຫວ່າງຢູ່ຕະຫຼອດ."




# ວິທີເຮັດວຽກ

**ພາກທີ 6**
**ວິທີນຳ**

ຖ້າຫາກວ່າໃນນະໂຍບາຍ, ໃນຄຳສັ່ງ ແລະ ໃນຄຳຂວັນຂອງຊັ້ນສູງນັ້ນຫາກມີສິ່ງໃດບົກພ່ອງ ພະນັກງານກໍຕ້ອງມີນ້ຳໃຈຮັບຜິດຊອບຕໍ່ປະຊາຊົນແລະ ສະເໜີໄປໃຫ້ຂັ້ນສູງແກ້ໄຂບ່ອນບົກພ່ອງນັ້ນ, ຖ້າບໍ່ເຮັດແນວນັ້ນ ກໍໝາຍຄວາມວ່າພະນັກງານຮັບຜິດຊອບຕໍ່ປະຊາຊົນ, ຕໍ່ພັກ ແລະ ຕໍ່ລັດຖະບານດັ່ງດຽວກັນ. ວຽກການອັນໃດກໍປຶກສາຫາລືກັບປະຊາຊົນ ຊີ້ແຈງອະທິບາຍໃຫ້ປະຊາຊົນນັ້ນ ຈຶ່ງແມ່ນຮັບຜິດຊອບຕໍ່ປະຊາຊົນ.

ກົງກັນຂ້າມ, ຖ້າວ່າວຽກການອັນໃດກໍໃຊ້ແຕ່ແບບອາດຍາ ມີແຕ່ອອກຄຳສັ່ງ, ນັ້ນບໍ່ແມ່ນຮັບຜິດຊອບຕໍ່ປະຊາຊົນ ນັ້ນແມ່ນເອົາຄວາມເວົ້າສອງຄວາມຄື: "ຄຳສັ່ງ" ນັ້ນມາໃຊ້ເປັນຝາປະທາຍຂັ້ນລະຫວ່າງພັກ ແລະ ລັດຖະບານກັບປະຊາຊົນໃຫ້ຫ່າງໄກກັນ, ຂັ້ນຜົນປະໂຫຍດຂອງປະຊາຊົນກັບນະໂຍບາຍຂອງພັກ ແລະ ລັດຖະບານໃຫ້ຫ່າງໄກກັນ.

ມີພະນັກງານຫຼາຍຄົນ ບໍ່ປຶກສາຫາລືນຳປະຊາຊົນ ບໍ່ຊີ້ແຈງອະທິບາຍໃຫ້ປະຊາຊົນບໍ່ປ່ອຍໃຫ້ປະຊາຊົນອອກຄຳຄິດ ຄຳເຫັນ, ເມື່ອແກ້ໄຂບັນຫາໃດ ກໍບັງຄັບໃຫ້ປະຊາຊົນເຮັດຕາມຄຳສັ່ງຂອງຕົນຈົນວ່າເມື່ອປະຊາຊົນນຳສະເໜີຄຳຄິດຄຳເຫັນ ແລະ ຍົກບັນຫາຂຶ້ນມາເວົ້າຢ່າງຄັກແນ່ ປານໃດກໍຊອກທຸກວິທີ ເພື່ອຖົບຖົມປົກປິດໄວ້. ມີແຕ່ບັງຄັບຜູ້ອື່ນເຮັດຕາມຄຳຄິດຄຳເຫັນຂອງຕົນເອງ ຜົນສຸດທ້າຍກໍເຮັດໃຫ້ປະຊາຊົນສົງໄສ, ອຸກອັ່ງ ແລະ ເສຍໃຈຕາມໆກັນໄປ.

ອ່ານຕໍ່ສະບັບໜ້າ...



# ຂຽນຄຳລາວໃຫ້ຖືກ

\#ຄູແສງ

| ຖືກ | ຜິດ |
|---|---|
| ອາໄສ | ~~ອາໃສ~~ |
| ໄປໃສ | ~~ໄປໄສ~~ |
| ຂັ້ນໃດ | ~~ຂັ້ນໄດ~~ |
| ແນວໃດ | ~~ແນວໄດ~~ |
| ຄາງກະໄຕ | ~~ຄາງກະໃຕ~~ |
| ຕັບໄຕ | ~~ຕັບໃຕ~~ |
| ວິໄນ | ~~ວິໃນ~~ |
| ຢູ່ໃນ | ~~ຢູ່ໄນ~~ |
| ນ້ຳໄຫຼ | ~~ນ້ຳໃຫຼ~~ |
| ຫຼົງໄຫຼ | ~~ຫຼົງໃຫຼ~~ |



**ສຸກສະບາຍທາຍໂລດ**

# ຊາຫົວສີໄຄ, ໃບເຕີຍທີ່ທ່ານຕ້ອງລອງ

ໂດຍ: ທິວກະທິ



ຫົວສິງໄຄ ແລະ ໃບເຕີຍ ເປັນສະໝຸນໄພທີ່ມີສັບພະຄຸນຫຼາກຫຼາຍທີ່ເປັນປະໂຫຍດຕໍ່ຮ່າງກາຍ ແລະ ທີ່ສຳຄັນ ສະໝຸນໄພສອງຊະນິດນີ້ມີສັບພະຄຸນທາງຢາ ໂດຍສະເພາະຫົວສິງໄຄທີ່ຖືກນຳມາເປັນສ່ວນປະກອບໃນການເຮັດຢານວດ ແລະ ສັບພະຄຸນທາງຢາອີກຫຼາຍຂະໜານ ມື້ນີ້, ໃນຄໍລຳສຸກສະບາຍທາຍໂລດຈະມາແນະນຳການເຮັດຊາຫົວສິງໄຄ, ໃບເຕີຍ ເພື່ອດື່ມແກ້ອາການຊາ, ເຈັບຫຼັງ, ເຈັບຂາ ເຊິ່ງຂັ້ນຕອນການເຮັດມີດັ່ງນີ້:

ສ່ວນປະສົມປະກອບມີ:
- ຫົວສິງໄຄ 3-4 ຫົວ
- ໃບເຕີຍ 6-7 ກ້ານ
- ນ້ຳຕານໝາກພ້າວ ຫຼື ນ້ຳເຜີ້ງ ຫຼື ນ້ຳຕານຊາຍກໍໄດ້ (ບໍ່ໃສ່ຍິ່ງເປັນການດີ).
-ນ້ຳດື່ມສະອາດ 1 ລິດ

**ຂັ້ນຕອນການເຮັດ:**

ລ້າງຫົວສິງໄຄ ແລະ ໃບເຕີຍໃຫ້ສະອາດ, ຈາກນັ້ນ ນຳມາຕົ້ມຈົນຝົດ ຜ່ອນໄຟລົງຄ່ອຍໆ ແລ້ວຕົ້ມຕໍ່ອີກ 15 ນາທີ ຫ້າມເປີດຝາໂດຍເດັດຂາດ, ເມື່ອຄົບ 15 ນາທີແລ້ວ ປະໄວ້ໃຫ້ເຢັນ ຫາກຕ້ອງການໃສ່ນ້ຳຕານສາມາດໃສ່ໄດ້ ແຕ່ໃຫ້ໃສ່ໃນປະລິມານທີ່ພໍດີ ຖ້າຫາກຈະເຮັດໄວ້ດື່ມຫຼາຍເທື່ອ ແນະນຳຫ້າມໃສ່ນ້ຳຕານຕອນຕົ້ມ ເມື່ອນຳມາດື່ມຈຶ່ງໃສ່ນ້ຳຕານ.

ພ້ອມນີ້, ຈາກຜົນວິໄຈໃຫ້ຮູ້ວ່າ ຊາຫົວສີໄຄໃບເຕີຍ ຫາກດື່ມແທນນ້ຳລ້າງໆ ຕິດຕໍ່ກັນປະມານ 1 ອາທິດ ຈະຊ່ວຍລ້າງກົດຢູຣິກອອກຈາກຮ່າງກາຍໄດ້ອີກດ້ວຍ.

**ຂໍ້ມູນຈາກ: www.lnr.org.la**





## ຫົກຫາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັບເອງ ບໍ່ເຄັ່ງພິທີການ)*

# ສຽມທ້ຽນ

❊ **ຈາກ**ອິດທິພົນທີ່**ພາຍຸໄຕ້ຝຸ່ນຢາກີ**ທີ່ໄດ້ພັດຜ່ານ ສປປລາວ ໃນອາທິດຜ່ານມາ ໄດ້ສ້າງຄວາມເສຍຫາຍຢ່າງມະຫາສານໃຫ້ແກ່ພໍ່ແມ່ປະຊາຊົນຫຼາຍທ້ອງຖິ່ນ ແລະ ໃຫ້ສືບຕໍ່ເຝົ້າລະວັງ**ພາຍຸລູກໃໝ່** ໂດຍສະເພາະເຂດແຂວງລຽບແຄມນ້ຳ ນອນບ້ານຂອງຍິ່ງລົ້ນ ກາຍຝັ່ງແຄມ ບະທີຫາບີແດນຈຳປາໝູ່ອາໃປໄຫຼເຂົ້າບ່າເອົາຄວາມເສຍຫາຍລົ້ນ ປົບນ້ຳຕາໄຫຼຫຼັ່ງ ດັ່ງເຫດການກ່າວຢ້ຳ ທ່ານະຊາດຮ້ອງຮຽກຄືນ **ນັ້ນແລ້ວ!**

❊ **ໃກ້**ຈະສິ້ນ**ເດືອນກັນຍາ** ກຽມຕ້ອນຮັບເດືອນຕຸລາຢ່າງເປັນທາງການໃນສະບັບຕໍ່ໄປ ເຊິ່ງເຫັນໄດ້ວ່າມີຫຼາຍເຫດການສຳຄັນ ນັ້ນກໍຄື **ວັນຄູແຫ່ງຊາດ ວັນປະກາດເອກະລາດ** ວັນບຸນອອກພັນສາ (ປະວໍລະນາ) ແລະ ຊ່ວງເຮືອບະຄອນຫຼວງວຽງຈັນ ແຕ່ກ່ອນຈະໄປເຖິງເຫດການສຳຄັນເຫຼົ່ານັ້ນ ຈະຊວນທ່ານມາເບິ່ງເບື້ອງ ບຸນໃຫຍ່ກາງພັນສາ ເພື່ອສັບຫາຜົນບຸນໃຫ້ຄ້ຳຈູນໜູນຍູ້ ຊູຊ່ອຍທັງເສີມສ້າງ ບາລະມີແກ່ຊີວິດ ກຽມຈິດໃຈໃສ່ນັ້ນ ພັນສາພົ້ນເພີນຊ່ວງເຮືອ **ນັ້ນແລ້ວ!**




# ຢ່າປະໝາດ

# ອະທິຖານຮັກ

❊ ຢ່ານອນຫງາຍຫຼີ້ນງ້າວ
ແຖມແກວ່ງໂຍນແຍງເອີກ
ບູຮານວ່າຜີປັດປ້າຍ
ຊັດໃສ່ຄໍປວດຄົ້ນ ຊັດໃສ່ຊີ້ນປວດໄສ້
ປາຍດາບຄົມແຫຼມ
ອວດດີດູຢ້ານ
ປາຍມີຄົມຂະໜາດ
ລະທົມໄຫ້ຄັບຕຽງ ແທ້ໄດ!

❊ ຜີບໍ່ເຄີຍຄອບຄົ້ນ
ບໍ່ຫ່ອນຈູງໃຈສິງ
ຜີທີ່ເສຍສະຕິຕັ້ງ
ຈິດແຜ່ວເບົາພາດພັ້ງ
ຄຸມສັ່ງຊວນສະຕິ ທ່ານນາ!
ເງົ່າງົງລະງຶມງ້ວງ
ຕົວເອງເກີນປະໝາດ ນີ້ແລ້ວ!
ບໍ່ຫາຮ້ອງໂທດຜີ ດອກນາ!

❊ ຕື່ນເຊົ້າພົບພໍ້ໜ້າ
ຊີວິດຍັງຍືນຍາວ
ຄືດັ່ງຫີນຊັນຊິ້ງ
ສ່ຽງໄຂ່ຕົກຕອກຕຶ້ງ
ບໍ່ຕາຍແຈບຈົມດັບ ຊັ້ນໃດ!
ຕໍ່ວັນວຽນມື້
ຜະຫວາງອຍຄ້ອຍງ່ຽງ
ຕຳພື້ນແຕກຊູ່ຍາມ

❊ ທ່ານທີ່ຫັນຮືກຫ້າວ
ຊອມຊ່ອງຍາມຫຽວເດີນ
ຊ້າຍຂວາເລັງແລຮູ້
ປອດໄພທົນທ່ຽງໝັ້ນ ສຸກຢູ່ນານບໍ່ໄດ້
ກ້າເກັ່ງເກີນຂະຫຍັນ ກໍຕາມນາ!
ຈວບຈະລາຈອນດົ້ນ
ລະວັງດີດູຕະຫລອດ
ຂີດໄງ້ເງົ່າງົມ ດອກນາ!

❊ ໃຜຜູ້ເມົາມ່ວນດົ້
ເປັນຈັ່ງອະນິດຈາຈິງ
ເສຍຊັບສິນຊີວິດດົ້ນ
ເຫດທີ່ປະໝາດແທ້
ປະໝາດລ່ວງລືມເຫັນ
ແຈບມອຍທະລາຍໄໝ້
ດັບລົງທຸກຂະເວດ
ສັ່ງຫອນໃຫ້ຮ່ຳພຶງ ເອົາທ້ອນ!




## ຊວນຍິ້ມ

# ແອ່ນຕຸ້ງ

### ເລື່ອງ: ໝໍເກັ່ງ

ແມ່ຕູ້ເມັນໄປຫາໝໍຢູ່ຄຣີນິກແຫ່ງໜຶ່ງພໍຮອດຄິວແມ່ຕູ້ກໍຍ່າງເຂົ້າໄປໃນຫ້ອງກວດ ພ້ອມທັງຍົກມືສະບາຍດີ

**ໝໍ:** ສະບາຍດີ ຄັ້ຄັ້ ມື້ນີ້ມາປຶກສາບັນຫາເລື່ອງສາຍຕາແມ່ນບໍ່.

**ແມ່ຕູ້:** ອຸ້ຍຕາຍ... ເກັ່ງສົມຄຳລ້ຳລືແທ້ ຮູ້ໄດ້ຈັ່ງໃດ? ທັ້ງທີ່ຍັງບໍ່ທັນໄດ້ກວດຊ້ຳ.

**ໝໍ:** (ອ້ຳອຶ້ງ) ເອີຄື... ຕອນກີ້ນີ້ ແມ່ຕູ້ຍົກມືສະບາຍດີຕູ້ເຢັນ.



## ຄະຕິເຕືອນໃຈ

# ດອກຫຍ້າ

ອັດສະລັບໃຈກຸ້ງ ມີຝູງບໍ່ມີໄຂ່
ອັດສະລັບໝາກລິ້ນໄມ້ ມີລີ້ນປາກບໍ່ເປັນ

ລັດຖະສະພາຕ່າງປະເທດ

# ຈອກດານີ ປະກາດຜົນເບື້ອງຕົ້ນ ການເລືອກຕັ້ງສະພາຜູ້ແທນລາສະດອນ

ເມື່ອວັນພຸດທີ 11 ກັນຍາຜ່ານມາ, ທ່ານ ມູຊາ ມາອີຕະ (Musa Maaytah) ປະທານຄະນະກຳມະການການເລືອກຕັ້ງເອກະລາດຂອງຈອກດານີ (ຈໍແດນ) ປະກາດຜົນຂອງການເລືອກຕັ້ງສະມາຊິກສະພາຜູ້ແທນລາສະດອນ (ສະພາຕ່ຳ) ຊຸດທີ XX; ທ່ານ ມາອີຕະ ລາຍງານວ່າ ມີຜູ້ມາໃຊ້ສິດເລືອກຕັ້ງພຽງຮ້ອຍລະ 32.13 ໂດຍມີຜູ້ອອກມາລົງຄະແນນສຽງ 1,632,696 ຄົນ ຈາກຜູ້ມີສິດເລືອກຕັ້ງ 5.1 ລ້ານຄົນ ໃນການເລືອກຕັ້ງທີ່ຈັດຂຶ້ນເມື່ອວັນອັງຄານທີ 10 ກັນຍາ.

ມີແມ່ຍິງທັງໝົດ 27 ຄົນ ໄດ້ທີ່ນັ່ງໃນສະພາຜູ້ແທນລາສະດອນ, ໃນນີ້ມີ 18 ຄົນທີ່ໄດ້ຮັບການເລືອກຕັ້ງຜ່ານລະບົບໂກຕາ ເຮັດໃຫ້ຈຳນວນຜູ້ແທນເພດຍິງໃນສະພານິຕິບັນຍັດເພີ່ມຂຶ້ນສອງເທົ່າທຽບໃສ່ຊຸດຜ່ານມາ; ມີຜູ້ສະໝັກໜຸ່ມ 6 ຄົນ ແລະ ຜູ້ສະໝັກ 104 ຄົນ ສັງກັດພັກການເມືອງ ໄດ້ຮັບການເລືອກຕັ້ງ, ໃນນັ້ນມີ 31 ຄົນ ຈາກແນວໂຮມການເຄື່ອນໄຫວອິດສະລາມ (Islamic Action Front) ເຊິ່ງເປັນພັກການເມືອງຂອງກຸ່ມອ້າຍນ້ອງມຸດສະລິມ (Muslim Brotherhood).

ການເລືອກຕັ້ງຄັ້ງນີ້ ເປັນຄັ້ງທຳອິດພາຍໃຕ້ກົດໝາຍວ່າດ້ວຍການເລືອກຕັ້ງສະບັບໃໝ່ທີ່ປະກາດໃຊ້ໃນປີ 2022 ເຊິ່ງໄດ້ເພີ່ມຈຳນວນສະມາຊິກສະພາຜູ້ແທນລາສະດອນ ຈາກ 130 ຂຶ້ນເປັນ 138 ທີ່ນັ່ງ ແລະ ແນໃສ່ເພີ່ມການເປັນຕົວແທນຂອງແມ່ຍິງ ແລະ ຜູ້ສະໝັກໜຸ່ມ.

**ແຫຼ່ງຂ່າວ: ຊິນຮວາ**



# ລັດຖະບານອິດສະຕຣາລີ ກຽມອອກ ກົດໝາຍຫ້າມເປີດເຜີຍຂໍ້ມູນສ່ວນຕົວ



ການເປີດເຜີຍຂໍ້ມູນສ່ວນຕົວໂດຍບໍ່ໄດ້ຮັບຄວາມຍິນຍອມ ຖືເປັນການກະທຳຜິດທາງອາຍາໃນປະເທດອົດສະຕຣາລີ ພາຍໃຕ້ກົດໝາຍຄຸ້ມຄອງຄວາມເປັນສ່ວນຕົວສະບັບໃໝ່ຂອງລັດຖະບານ.

ທ່ານ ມາກ ເດຣຟັສ (Mark Dreyfus) ໄອຍະການສູງສຸດຂອງອົດສະຕຣາລີ ໄດ້ສະເໜີຮ່າງກົດໝາຍດັ່ງກ່າວຕໍ່ລັດຖະສະພາໃນວັນພະຫັດທີ 12 ກັນຍາຜ່ານມາ ເຊິ່ງຈະເຮັດໃຫ້ການເປີດເຜີຍຂໍ້ມູນສ່ວນຕົວເປັນເລື່ອງຜິດກົດໝາຍ ແລະ ຜູ້ຖືກເຄາະຮ້າຍຈາກການລ່ວງລະເມີດຄວາມເປັນສ່ວນຕົວຢ່າງຮ້າຍແຮງ ມີສິດຮຽກຮ້ອງຄ່າຊົດເຊີຍຜ່ານລະບົບສານ.

ພາຍໃຕ້ກົດໝາຍດັ່ງກ່າວ, ຜູ້ໃດທີ່ຖືກພົບວ່າມີຄວາມຜິດໃນການເປີດເຜີຍຂໍ້ມູນສ່ວນຕົວຂອງຜູ້ອື່ນທາງອອນລາຍ ໂດຍມີເຈດຕະນາສ້າງຄວາມເສຍຫາຍທີ່ເປັນອັນຕະລາຍ ເຊິ່ງເປັນການກະທຳທີ່ເອີ້ນກັນວ່າ doxxing ຈະຕ້ອງຮັບໂທດຈຳຄຸກສູງສຸດ 6 ປີ; ໂທດຈຳຄຸກສູງສຸດຈະເພີ່ມເປັນ 7 ປີ ໃນກໍລະນີທີ່ບຸກຄົນ ຫຼື ກຸ່ມຄົນຕົກເປັນເປົ້າໝາຍຍ້ອນສາສະໜາ, ເຊື້ອຊາດ, ເພດ, ຄວາມພິການ, ສັນຊາດ ຫຼື ຊົນເຜົ່າ.

ນອກຈາກນີ້, ກົດໝາຍຈະໃຫ້ສິດແກ່ຊາວອົດສະຕຣາລີໃນການຟ້ອງຮ້ອງຮຽກຄ່າເສຍຫາຍ ຖ້າພວກເຂົາຕົກເປັນເຫຍື່ອຂອງການລະເມີດຄວາມເປັນສ່ວນຕົວຢ່າງຮ້າຍແຮງ.

**ແຫຼ່ງຂ່າວ: ຊິນຮວາ**

# ຈີນ ເພີ່ມອາຍຸບຳນານໃນຮອບເຄິ່ງສະຕະວັດ

ລັດຖະບານຈີນເພີ່ມອາຍຸບຳນານຂອງປະຊາກອນໃນປະເທດ ເປັນຄັ້ງທຳອິດນັບຕັ້ງແຕ່ຊຸມປີ 1950, ທ່າມກາງວິກິດການສັງຄົມຜູ້ອາຍຸສູງ.

ວັນທີ 13 ກັນຍາຜ່ານມາ, ເວັບໄຊຂ່າວສານຊິນຮວາໄດ້ເຜີຍແຜ່ຜົນກອງປະຊຸມຄະນະລັດຖະບານ ເຊິ່ງຕໍ່ມາຜ່ານການອະນຸມັດຈາກສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ໃນການເພີ່ມອາຍຸບຳນານທີ່ຖືກຕ້ອງຕາມກົດໝາຍຂອງແຮງງານຊາຍ ເປັນ 63 ປີ ຈາກ 60 ປີ, ສ່ວນອາຍຸບຳນານຂອງແຮງງານຍິງ ເພີ່ມຂຶ້ນເປັນລະຫວ່າງ 55-58 ປີ ຈາກ 50-55 ປີ.



ມາດຕະການດັ່ງກ່າວຈະມີຜົນສັກສິດເປັນເວລາຢ່າງໜ້ອຍ 15 ປີ, ເລີ່ມແຕ່ວັນທີ 1 ມັງກອນ 2025, ໂດຍການເພີ່ມອາຍຸບຳນານຈະເປັນແບບເທື່ອລະກ້າວ ເພື່ອໃຫ້ທັງນາຍຈ້າງ ແລະ ລູກຈ້າງສາມາດວາງແຜນການຈ້າງງານແລະການເຮັດວຽກໄດ້ຢ່າງເໝາະສົມ.

ການປັບປ່ຽນເກນອາຍຸບຳນານຄັ້ງນີ້ ແມ່ນອີງຕາມການສຶກສາ ແລະ ການວິເຄາະຢ່າງລະອຽດ ໂດຍອີງໃສ່ອາຍຸຍືນສະເລ່ຍ, ແນວໂນ້ມສຸຂະພາບປະຊາກອນ, ໂຄງສ້າງປະຊາກອນ, ລະດັບການສຶກສາ ແລະ ສະພາບຕະຫຼາດແຮງງານພາຍໃນປະເທດຈີນ.

ການເຄື່ອນໄຫວຂອງລັດຖະບານໃນເລື່ອງນີ້ມີຂຶ້ນໃນຂະນະທີ່ປະເທດຈີນກຳລັງປະເຊີນກັບວິກິດການປະຊາກອນ ຈາກການເຂົ້າສູ່ສັງຄົມຜູ້ອາຍຸສູງ ໂດຍຄະນະກຳມະການສາທາລະນະສຸກແຫ່ງຊາດຄາດຄະເນວ່າ ປະຊາກອນທີ່ມີອາຍຸ 60 ປີຂຶ້ນໄປໃນຈີນ ຈະເພີ່ມຂຶ້ນຈາກ 280 ລ້ານຄົນ ເປັນຫຼາຍກວ່າ 400 ລ້ານຄົນ ໃນປີ 2035 ຫຼືເທົ່າກັບຈຳນວນປະຊາກອນທັງໝົດໃນປັດຈຸບັນຂອງສະຫະລາຊະອານາຈັກ (ອັງກິດ, ສະກັອດແລນ, ເວວ ແລະ ອຽກລັງເໜືອ) ແລະ ສະຫະລັດອາເມລິກາ ລວມກັນ.

# ພັກລັດຖະບານຂອງ Azerbaijan ຍັງຮັກສາອຳນາດໃນສະພາແຫ່ງຊາດ

ທ່ານ ມາຊາຮີຣ໌ ປານາຄອຟ (Mazahir Panakhov) ປະທານຄະນະກຳມະການການເລືອກຕັ້ງສູນກາງ ກ່າວໃນຕອນເຊົ້າວັນທີ 02 ກັນຍາ 2024 ຫຼັງຈາກນັບຜົນການລົງຄະແນນຢູ່ໜ່ວຍປ່ອນບັດເລືອກຕັ້ງປະມານ 5,895 ແຫ່ງ ວ່າ: ພັກອາແຊກໄບຊານໃໝ່ພັກລັດຖະບານຊຸດປັດຈຸບັນ ໄດ້ຮັບໄຊຊະນະໄດ້ທີ່ນັ່ງຫຼາຍທີ່ສຸດໃນສະພາແຫ່ງຊາດຊຸດທີ VII ໃນການເລືອກຕັ້ງກ່ອນກຳນົດທີ່ຈັດຂຶ້ນເມື່ອວັນອາທິດທີ 01 ກັນຍາຜ່ານມາ.



ຜົນເບື້ອງຕົ້ນສະແດງໃຫ້ເຫັນວ່າ, ຜູ້ສະໝັກຈາກພັກອາແຊກໄບຊານໃໝ່ ຍາດໄດ້ 69 ທີ່ນັ່ງ, ຜູ້ສະໝັກເອກະລາດ ໄດ້ 38 ທີ່ນັ່ງ, ສ່ວນທີ່ເຫຼືອແມ່ນຜູ້ສະໝັກຈາກພັກການເມືອງຂະໜາດນ້ອຍ; ໂດຍມີຜູ້ສະໝັກຮັບເລືອກຕັ້ງ 991 ຄົນ ເພື່ອຍາດເອົາ 125 ທີ່ນັ່ງໃນສະພາແຫ່ງຊາດ, ມີຈຳນວນຜູ້ມາໃຊ້ສິດເລືອກຕັ້ງພຽງຮ້ອຍລະ 37.27.

ການເລືອກຕັ້ງຄັ້ງນີ້ ຖືເປັນການເລືອກຕັ້ງສະພາແຫ່ງຊາດກ່ອນກຳນົດຄັ້ງທີ 2 ໃນປະຫວັດສາດຂອງປະເທດ, ຖັດຈາກການເລືອກຕັ້ງກ່ອນກຳນົດຄັ້ງກ່ອນທີ່ຈັດຂຶ້ນໃນວັນທີ 09 ກຸມພາ 2020.

ເພື່ອຮັບປະກັນຄວາມໂປ່ງໃສໃນຂະບວນການເລືອກຕັ້ງ, ອາແຊກໄບຊານ ໄດ້ເປັນເຈົ້າພາບຕ້ອນຮັບຜູ້ສັງເກດການສາກົນ 604 ຄົນ ທີ່ມາຈາກ 50 ອົງການໃນ 69 ປະເທດ; ຍັງມີຜູ້ສັງເກດການທ້ອງຖິ່ນ 109,000 ກວ່າຄົນ ໃນນີ້ມີ 65,000 ຄົນ ຈາກພັກການເມືອງຕິດຕາມກວດກາການເລືອກຕັ້ງ. ນອກຈາກນີ້, ກໍມີຜູ້ສັງເກດການຫຼາຍກວ່າ 5,100 ຄົນ ຈາກອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGOs) ແລະ ອົງການຈັດຕັ້ງທາງສັງຄົມເຂົ້າຮ່ວມອີກດ້ວຍ.

ຜູ້ແທນປະມານ 60 ຄົນ ທີ່ມາຈາກລັດຖະສະພາ OSCE (Organization for Security and Co-operation in Europe ອົງການຄວາມໝັ້ນຄົງແລະການຮ່ວມມືໃນເອີຣົບ) ເຂົ້າຮ່ວມເຊັ່ນດຽວກັນ; ຫ້ອງການ OSCE ເພື່ອສະຖາບັນປະຊາທິປະໄຕ ແລະ ສິດທິມະນຸດ (Office for Democratic Institutions and Human Rights-ODIHR) ຈະປະຕິບັດພາລະກິດໄລຍະຍາວທີ່ປະກອບດ້ວຍຊ່ຽວຊານສາກົນ 11 ຄົນ, ພ້ອມກັບຜູ້ສັງເກດການໄລຍະສັ້ນ 280 ຄົນ.

ຕາມລັດຖະທຳມະນູນແຫ່ງ ສາທາລະນະລັດອາແຊກໄບຊານ, ການເລືອກຕັ້ງສະພາແຫ່ງຊາດ ແມ່ນຈັດຂຶ້ນທຸກໆ 5 ປີ ໃນວັນອາທິດທຳອິດຂອງເດືອນພະຈິກ.

**ແຫຼ່ງຂ່າວ: ຊິນຮວາ**

# ເບິ່ງໄວ້ ໄດ້ບົດຮຽນ

## ເລື່ອງສາລະໜ້າຮູ້ ໜ້າຮຽນຈາກຫວຽດນາມ

❖ ວິເສດ ສະແຫວງສຶກສາ

ໃນໄລຍະແຕ່ເດືອນ 6 ຫາເດືອນ 7 ປີ 2024 ນີ້ ມີຂ່າວທີ່ໜ້າສົນໃຈ ເບິ່ງໄວ້ເປັນບົດຮຽນຈຳນວນຫຼາຍຈາກຫວຽດນາມ, ແຕ່ຜູ້ຂຽນຂໍຈັດສັນກັ່ນຕອງມາສະເໜີພຽງ 3 ຂ່າວເທົ່ານັ້ນຄືຂ່າວທີ່ບອກວ່າຄ່າໃຊ້ຈ່າຍຢູ່ຫວຽດນາມນັ້ນ ເໝາະສົມກັບກະເປົາເງິນຂອງຊາວຕ່າງປະເທດ (ຂ່າວປະຊາຊົນ 11/7/2024) ຂ່າວກ່ຽວກັບຫຼັກປະຕິບັດ "3 ບໍ່" ດ້ານການທະຫານປ້ອງກັນຊາດ (ປະຊາຊົນ 12/7/2024) ແລະ ຂ່າວທິດຫັນຂະແໜງການສານເປັນດີຈີຕອນ (ປະຊາຊົນ18/6/2024).

ຂໍເປີດສາກກັບ**ຂ່າວທີ 1** ທີ່ບອກວ່າ **"ຫວຽດນາມແມ່ນປະເທດທີ່ມີຄ່າໃຊ້ຈ່າຍເໝາະສົມທີ່ສຸດໃນໂລກສຳລັບຊາວຕ່າງປະເທດ".** ລາຍລະອຽດຂອງຂ່າວນີ້ ໄດ້ອ້າງເຖິງບົດລາຍງານຂອງໜ່ວຍງານ Expat Insider ທີ່ສະຫຼຸບວ່າ ຄ່າໃຊ້ຈ່າຍຢູ່ຫວຽດນາມນັ້ນເໝາະສົມທີ່ສຸດກັບລາຍໄດ້ຂອງຊາວຕ່າງປະເທດ. ການສຳຫຼວດໄດ້ກວມເອົາ 53 ປະເທດ ແລະ ພື້ນທີ່ຕ່າງໆໃນໂລກ ໂດຍຫວຽດນາມໄດ້ຄອງອັນດັບທີ 1 ຕິດຕໍ່ມາ 4 ປີຊ້ອນ.

ຄຳວ່າ "ຄ່າໃຊ້ຈ່າຍເໝາະສົມທີ່ສຸດ" ນີ້ ມີຄວາມໝາຍວ່າ ຄ່າຄອງຊີບຖືກ, ເງິນເດືອນຊາວຕ່າງປະເທດທີ່ເຮັດວຽກຢູ່ຫວຽດນາມນັ້ນ ພໍໃຊ້ຈ່າຍຢ່າງສະບາຍ ແລະ ມີສ່ວນປະຢັດໄວ້. ເວົ້າໄດ້ວ່າ ສະພາບການຈັບຈ່າຍຖືກ ຫຼື ເໝາະສົມກັບຄວາມສາມາດນັ້ນແມ່ນເງື່ອນໄຂໜຶ່ງທີ່ຊ່ວຍດຶງດູດເອົານັກລົງທຶນ ກໍຄືນັກທ່ອງທ່ຽວເຂົ້າປະເທດໄດ້ຫຼາຍ.

ຢູ່ລາວພວກເຮົາ, ການໃຊ້ຈ່າຍເພື່ອຄອງຊີບນັ້ນຍັງສູງເກີນໄປ ເມື່ອທຽບກັບບັນດາປະເທດໃກ້ຄຽງ ຍ້ອນວ່າພວກເຮົາອີງອາໄສການນຳເຂົ້າສິນຄ້າຈາກຕ່າງປະເທດຫຼາຍເກີນໄປ. ນອກຈາກເປັນທີ 1 ດ້ານການໃຊ້ຈ່າຍທີ່ເໝາະສົມແລ້ວ, ຫວຽດນາມຍັງເປັນທີ 14 ດ້ານການສະໜອງເງື່ອນໄຂສະດວກສະບາຍສຳລັບການເຮັດວຽກຂອງຊາວຕ່າງປະເທດ (ອາຊີບ, ເງິນເດືອນ ແລະ ຄວາມໝັ້ນຄົງຂອງວຽກ), ເປັນທີ 29 ດ້ານການດຳລົງຊີວິດແບບດີຈີຕອນ, ເຮືອນຢູ່ ແລະ ການໃຊ້ພາສາ. **ຂ່າວທີ 2** ແມ່ນກ່ຽວກັບ**ຫຼັກປະຕິບັດ "3 ບໍ່"** ສຳລັບການທະຫານປ້ອງກັນຊາດ. ເລື່ອງມີຢູ່ວ່າ ທ່ານ ຟາມ ມິງ ຈິ່ງ ນາຍົກລັດຖະມົນຕີຫວຽດນາມ ໄດ້ເຂົ້າຮ່ວມ ແລະ ມີຄຳເຫັນຕໍ່ກອງປະຊຸມຕີລາຄາການເມືອງການທະຫານປ້ອງກັນຊາດ ປະຈຳ 6 ເດືອນຕົ້ນປີ ແລະ ວາງທິດທາງສຳລັບ 6 ເດືອນທ້າຍປີ 2024 ໂດຍທ່ານນາຍົກໄດ້ເນັ້ນການປັບປຸງສ້າງພື້ນຖານ ການປ້ອງກັນຊາດທົ່ວປວງຊົນ ສົມທົບກັບທ່າຮັບປ້ອງກັນຄວາມສະຫງົບທົ່ວປວງຊົນ, ສູ້ຊົນບຸກທະລຸໃໝ່ ປະກອບສ່ວນສຳຄັນເພື່ອສ້າງກອງທັບໃຫ້ກາຍເປັນກຳລັງຫຼວງ, ກະທັດຮັດແລະທັນສະໄໝ. ທ່ານໄດ້ຮຽກຮ້ອງໃຫ້ທົ່ວກອງທັບປະຕິບັດຫຼັກການ "3 ບໍ່" ຄື **ໜຶ່ງ:** ບໍ່ປະໝາດ, ລະເລີຍ ແລະ ຂາດສະຕິ, **ສອງ:** ບໍ່ໃຫ້ຕົກຢູ່ໃນທ່າຮັບດ້ານຍຸດທະສາດ ຢູ່ບັນດາສະຖານທີ່ຍຸດທະສາດ, ເປົ້າໝາຍທີ່ເປັນອັນຕະລາຍກໍຄືກຳລັງປໍລະປັກ ແລະ **ສາມ:** ບໍ່ປ່ອຍປະໃຫ້ເກີດສະພາບຫຍຸ້ງເຫຍີງຊັກຊ້າບໍ່ທັນການ, ຂາດປະສິບການໃນການແກ້ໄຂບັນຫາທີ່ເກີດຂຶ້ນແບບບັງເອີນ. ສຸດທ້າຍແມ່ນຂ່າວກ່ຽວກັບ**ທິດຫັນເປັນດີຈີຕອນໃນຂະແໜງການສານ.** ໃນວັນທີ 16 ມິຖຸນາ 2024 ທ່ານນາຍົກ ຟາມ ມິງ ຈິ່ງ ໄດ້ມີຄຳເຫັນຊີ້ນຳກອງປະຊຸມຂະແໜງການສານທົ່ວປະເທດ ກ່ຽວກັບການສ້າງລະບອບ, ລະບຽບການ, ກົນໄກ ແລະ ນະໂຍບາຍເພື່ອຫັນຂະແໜງການສານເປັນດີຈີຕອນກ້າວຂຶ້ນສ້າງສານເປັນລະບົບເອເລັກໂຕຣນິກ ແລະ ຮັບປະກັນຄວາມປອດໄພດ້ານເຄືອຂ່າຍ ແລະ ຂໍ້ມູນຂ່າວສານ. ທ່ານນາຍົກກ່າວວ່າ ວຽກງານສ້າງສານດີຈີຕອນ ຫຼື ສານລະບົບເອເລັກໂຕຣນິກ ເປັນວຽກທີ່ສຳຄັນໃນວິວັດທະນາການປະຕິຮູບດ້ານຕຸລາການ, ເປັນວຽກອັນຮີບດ່ວນຂອງລະບົບສານ ເພື່ອຍົກສູງປະສິດທິຜົນຂອງການເຄື່ອນໄຫວ.

ຄະນະກຳມະການລະດັບຊາດ
ປັບປຸງລັດຖະທຳມະນູນ
ລັດຖະທຳມະນູນ
ຂໍເຊີນຊວນບັນດາທ່ານພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ຈົ່ງປະກອບຄວາມຄິດເຫັນຕໍ່ການປັບປຸງລັດຖະທຳມະນູນ ສະບັບປີ 2015 ເຊິ່ງຄະນະຮັບຜິດຊອບໄດ້ຈັດຕັ້ງໜ່ວຍງານຮັບຄວາມຄິດເຫັນ, ຂໍ້ສະເໜີຜ່ານອີເມວ:
laocon@nalao.la




# ຄົນຂີ້ຄ້ານທີ່ສຸດໃນໂລກ

*# ບ່າວກະບື*

**ເ**ວລາຖືກເຊີນໃຫ້ມາເບິ່ງຄົນຂີ້ຄ້ານທີ່ສຸດຂອງໂລກ, ຕົວແທນສຳນັກພິມປຶ້ມ "Guinness Book" ຮູ້ສຶກຕື່ນເຕັ້ນ ເມື່ອເຫັນຊາຍຄົນໜຶ່ງນອນຢູ່ເທິງປາຍໄມ້. ຕົວແທນ "Guinness Book" ຖາມວ່າ: "ຖ້າເຂົາປີນຂຶ້ນຕົ້ນໄມ້ເອງໄດ້ ເພື່ອໄປນອນ... ແລ້ວຈະຖືວ່າເຂົາເປັນຄົນຂີ້ຄ້ານທີ່ສຸດຂອງໂລກໄດ້ແນວໃດ?"

ຜູ້ຮັບຜິດຊອບຕົວແທນ "Guinness Book" ຕອບວ່າ: "ເຂົາບໍ່ໄດ້ປີນຂຶ້ນເອງດອກທ່ານ. ເມື່ອສິບປີຜ່ານມາ ເຂົານອນຢູ່ພື້ນດິນ ໂດຍບໍ່ຮູ້ເລີຍວ່າຢູ່ກ້ອງບ່ອນເຂົານອນນັ້ນມີແກ່ນໄມ້."

# World Laziest Man

***# BAOKBU***

On being invited to see the world's laziest man, the representative of Guinness Book was surprised to be shown a man sleeping on the top of a tree.

"If he climbed the tree to sleep, how can he be the world's laziest man?" the Guinness Book representative asked.

"He did not climb the tree sir," the man who had invited him replied.

"Ten years ago he went to sleep on the ground not knowing that there was a seed beneath him."




● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

ຜູ້ຊີ້ນຳ
ທ່ານ ສິງຄຳ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

ຄະນະບັນນາທິການ
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

ກອງບັນນາທິການ
ທ່ານ ນາງ ວັນນາລີນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຽງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພິມມະປະດິດ

ອອກແບບ - ຈັດໜ້າ
ທ່ານ ນາງ ກຸກກິກ ບຸດດາໄຊ